ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄູ່ມື

## ການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ

ຈັດພິມໂດຍ: ກະຊວງປ້ອງກັນຄວາມສະຫງົບ

(ກອງເລຂາ ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ)

ປີ 2020

(ສະຫງວນລິຂະສິດ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

ເລກທີ..08.../ຄຕມຊ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2020

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາຄູ່ມືການປົກປ້ອງ ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

- ອີງຕາມ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ **73**/ສພຊ, ລົງວັນທີ **17** ທັນວາ **2015**;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ **245**/ນຍ, ລົງວັນທີ **03** ກໍລະກົດ **2018** ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ;
- ອີງຕາມ ໜັງສືລາຍງານ ສະບັບເລກທີ **11**./ຄຕມຊ.ກລຂ, ລົງວັນທີ **03** ເມສາ **2020** ຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

**ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ອອກຂໍ້ຕົກລົງ :**

**ມາດຕາ 1:** ຮັບຮອງ " ຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ".

**ມາດຕາ 2:** ມອບໃຫ້ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເປັນຜູ້ຮັບຜິດຊອບ ພ້ອມທັງເປັນເຈົ້າການປະສານສົມທົບໂດຍກົງກັບບັນດາຂະແໜງການກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

**ມາດຕາ 3:** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4 :** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ປະທານ

**ສອນໄຊ ສີພັນດອນ**

# ສາລະບານ

ໜ້າ


**ອະລໍາພະບົດ** (ຄວາມເປັນມາ, ຈຸດປະສົງ ແລະ ຂອບເຂດການນໍາໃຊ້ຄູ່ມື)....................................1
**ພາກທີ I ຄວາມໝາຍຂອງການຄ້າມະນຸດ**...........................................................................2
**ພາກທີ II ຫຼັກການປົກປ້ອງ, ຊ່ອຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ**..........................3
1. ຫຼັກການມະນຸດສະທໍາ......................................................................................3
2. ຫຼັກການສະເໝີພາບ....................................................................................... 3
3. ຫຼັກການຖືສິດຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ................................. 3
4. ຫຼັກການຮັກສາຄວາມລັບ ແລະ ຄວາມປອດໄພ...................................................... 3
5. ຫຼັກການສ້າງຄວາມເຂັ້ມແຂງແກ່ຜູ້ຖືກເຄາະຮ້າຍ...................................................3-4
6. ຫຼັກການປະສານສົມທົບ, ພົວພັນ ແລະ ຮ່ວມມືກັບສາກົນ........................................ 4

**ພາກທີ III ການປົກປ້ອງຜູ້ຖືກເຄາະຮ້າຍ**..............................................................................5
**ໝວດທີ 1 ການກອບກູ້**.........................................................................................................5
I. ການແຈ້ງຄວາມ ແລະ ການຮັບແຈ້ງຄວາມ.....................................................................5
1. ການແຈ້ງຄໍາ..................................................................................................5
2. ການຮັບແຈ້ງຄວາມ.........................................................................................5-6
II. ຄວາມຮັບຜິດຊອບ ໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ...........................................................................................................6
1. ຄວາມຮັບຜິດຊອບ ໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພາຍໃນປະເທດ..................................................................6
1). ເຈົ້າໜ້າທີ່ຕໍາຫຼວດ..........................................................................................6
2). ທະຫານຊາຍແດນ.........................................................................................6-7
3). ກະຊວງການຕ່າງປະເທດ...................................................................................7
4). ອົງການປົກຄອງບ້ານ.......................................................................................7
2. ຄວາມຮັບຜິດຊອບໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ຕ່າງປະເທດ...........................................................................7-8
III. ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ........................................................8
1. ການກໍານົດຕົວເບື້ອງຕົ້ນ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ............... 8
2. ການຢັ້ງຢືນວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ...............................................8-9

**ໝວດທີ 2 ການຮັກສາຄວາມປອດໄພ ແລະ ການຮັກສາຄວາມລັບ**........................................9
I. ການຮັກສາຄວາມປອດໄພ..........................................................................................9
1. ໄລຍະການກອບກູ້ ແລະ ນໍາສົ່ງ................................................................................9
2. ໄລຍະຢູ່ສະຖານທີ່ພັກເຊົາຊົ່ວຄາວ 9
3. ໄລຍະການດໍາເນີນຄະດີ 9-10
4. ໄລຍະໄປໃຫ້ການ ຫຼື ເຂົ້າຮ່ວມປະຊຸມສານຢູ່ຕ່າງປະເທດ 10
5. ໄລຍະການນໍາສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ 10
II. ການຮັກສາຄວາມລັບ 10

**ພາກທີ IV ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ**.......................................................11
**ໝວດທີ 1 ການຊ່ວຍເຫຼືອແຕ່ລະດ້ານແກ່ຜູ້ຖືກເຄາະຮ້າຍທີ່ເປັນພົນລະເມືອງລາວ**...........11
1. ການຊ່ວຍເຫຼືອດ້ານສະຖານທີ່ພັກເຊົາ.......................................................11
2. ການຊ່ວຍເຫຼືອດ້ານກົດໝາຍ.......................................................11-12
3. ການຊ່ວຍເຫຼືອດ້ານການແພດ.......................................................12-13
4. ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ.......................................................13
5. ການຊ່ວຍເຫຼືອດ້ານເສດຖະກິດ.......................................................13
6. ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ.......................................................13
1). ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ.........................13-14
2). ການຕິດຕາມ ຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ.......................................................14

**ໝວດທີ 2 ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ຢູ່ ສປປ ລາວ**...............14
**ພາກທີ V ການສົ່ງຕໍ່ຜູ້ຖືກເຄາະຮ້າຍ**.......................................................15
I. ຄວາມຮັບຮູ້ກ່ຽວກັບການສົ່ງຕໍ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.......................................................15
1. ຄວາມໝາຍການສົ່ງຕໍ່.......................................................15
2. ຈຸດປະສົງການສົ່ງຕໍ່.......................................................15
II. ຂັ້ນຕອນການສົ່ງຕໍ່.......................................................15
ຂັ້ນຕອນການສົ່ງຕໍ່ລວມມີວຽກດັ່ງນີ້:.......................................................15
1. ການປະສານສົມທົບກ່ອນການ ມອບ - ຮັບ.......................................................15
2. ການກະກຽມການມອບ-ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.......................................................15-17
3. ການມອບ-ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.......................................................17-18

**ພາກທີ VI ແຜນວາດການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ**...............................19
ແຜນວາດທີ 1 ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຂອງ ສປປ ລາວ.........................................20-21
ແຜນວາດທີ 2 ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ລາວ - ໄທ.........................................22-23
ແຜນວາດທີ 3 ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ລາວ - ຈີນ.........................................24-25
ຮ່າງແບບພິມການສຳພາດໃນກໍລະນີຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ.........................................26-27
ຮ່າງແບບພິມການສຳພາດກໍລະນີເປັນຜູ້ຖືກເຄາະຮ້າຍ.........................................28

# ອະລຳພະບົດ

ການຄ້າມະນຸດ ໄດ້ກຳເນີດເກີດຂຶ້ນໃນສະໄໝລະບອບຂ້າທາດເປັນຕົ້ນມາ ຍ້ອນວິວັດທະນາການຂອງລະບອບສັງຄົມມີການປ່ຽນແປງໄປໃນແຕ່ລະຍຸກ, ແຕ່ລະສະໄໝເຮັດໃຫ້ຮູບການ, ວິທີການ ຂອງການຄ້າມະນຸດມີການປ່ຽນແປງໄປຕາມລະບອບສັງຄົມນັ້ນໆ. ມາເຖິງປະຈຸບັນ ໃນຍຸກໂລກາພິວັດ ເຫັນວ່າຂະບວນການຄ້າມະນຸດຍິ່ງມີຄວາມເລິກແລບ, ເຊື່ອງຊ້ອນທີ່ເປັນໄພອັນຕະລາຍຕໍ່ມະນຸດຊາດ ຊຶ່ງໄດ້ແຜ່ລາມຢູ່ໃນໂລກ, ພາກພື້ນລວມທັງ ສປປ ລາວ. ສຳລັບ ສປປ ລາວ ສ່ວນຫຼາຍແມ່ນເປັນປະເທດຕົ້ນທາງຂອງການຄ້າມະນຸດ ຊຶ່ງໃນແຕ່ລະປີມີພົນລະເມືອງລາວຈຳນວນບໍ່ໜ້ອຍ ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ສ່ວນຫຼາຍຖືກຂູດຮີດແຮງງານ, ຂູດຮີດທາງເພດ ຢູ່ພາຍໃນ ແລະ ຕ່າງປະເທດ. ຍ້ອນແນວນັ້ນ, ລັດຖະບານ ແຫ່ງ ສປປ ລາວ ຍາມໃດກໍໃຫ້ຄວາມສຳຄັນຕໍ່ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໂດຍໄດ້ວາງແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ສ້າງກົນໄກ ແລະ ແຜນງານແຫ່ງຊາດ ວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ເປັນອັນສະເພາະ. ໄປພ້ອມກັນນັ້ນ, ສປປ ລາວ ຍັງໄດ້ເຂົ້າເປັນພາຄີ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນຫຼາຍສະບັບທີ່ກ່ຽວຂ້ອງກັບການຕ້ານການຄ້າມະນຸດ ທັງໃນລະດັບສາກົນ ແລະ ພາກພື້ນ ເປັນຕົ້ນແມ່ນ ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ, ອະນຸສັນຍາວ່າດ້ວຍ ການສະກັດກັ້ນ, ປາບປາມ ແລະລົງໂທດການຄ້າມະນຸດ ໂດຍສະເພາະການຄ້າແມ່ຍິງ ແລະ ເດັກນ້ອຍ ຊຶ່ງເພີ່ມເຕີມໃຫ້ແກ່ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ, ສົນທິສັນຍາວ່າດ້ວຍການລົບລ້າງການເປັນຂ້າທາດ, ຄ້າຂາຍຜູ້ເປັນທາດ ແລະ ສະຖາບັນ ແລະ ການກະທຳທີ່ມີລັກສະນະຄ້າຍຄືກັນ, ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາວ່າດ້ວຍສິດທິຂອງເດັກ, ອະນຸສັນຍາເພີ່ມເຕີມໃຫ້ແກ່ສົນທິສັນຍາວ່າດ້ວຍສິດທິຂອງເດັກກ່ຽວກັບການຄ້າເດັກ, ການຄ້າໂສເພນີເດັກ ແລະ ສິ່ງລາມົກອານາຈານກ່ຽວກັບເດັກ, ສົນທິສັນຍາວ່າດ້ວຍ ການກຳຈັດທຸກຮູບແບບການຈຳແນກເຊື້ອຊາດ, ສົນທິສັນຍາວ່າດ້ວຍ ການຕ້ານການທໍລະມານ, ການປະຕິບັດຕໍ່ ຫຼື ການລົງໂທດທີ່ໂຫດຮ້າຍປ່າເຖື່ອນ, ໄຮ້ມະນຸດສະທຳ ຫຼື ແບບເສື່ອມຊາມ. ໃນໄລຍະຜ່ານມາ ສປປ ລາວ ໄດ້ເຊັນສັນຍາຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ກັບບັນດາປະເທດເຊັ່ນ ກັບ ສສ ຫວຽດນາມ, ສປ ຈີນ, ຣາຊະອານາຈັກໄທ ແລະ ກອບການປະສານງານລະດັບລັດຖະມົນຕີໃນອານຸພາກພື້ນລຸ່ມນ້ຳຂອງເພື່ອຕ້ານການຄ້າມະນຸດ (ຄອມມິດ), ແຜນງານອົດສະຕາລີ-ອາຊີເພື່ອຕ້ານການຄ້າມະນຸດ ແລະ ກອບອາຊຽນ.

ຄູ່ມືສະບັບນີ້ ແມ່ນການຈັດຕັ້ງຜັນຂະຫຍາຍສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ, ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ເປັນຕົ້ນແມ່ນ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃນແຕ່ລະໄລຍະໃຫ້ເປັນອັນລະອຽດ, ແນໃສ່ເຮັດໃຫ້ການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ເປັນລະບົບ, ທັນການ ແລະ ມີປະສິດທິຜົນ.

ຄູ່ມືສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

# ພາກທີ I
# ຄວາມໝາຍຂອງການຄ້າມະນຸດ

ການຄ້າມະນຸດ ແມ່ນ ການຊອກຫາ, ລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ດ້ວຍການຂົ່ມຂວາຍ, ແນະນຳ, ຕົວະຍົວະ ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ການເອົາເດັກ ມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ການໃຫ້ຖືພາ, ຂໍທານ ແລະ ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງ ເພດ, ເປັນຂ້າທາດ, ຄ້າປະເວນີຂອງຜູ້ອື່ນ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆ ຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

ການກະທຳຕ່າງໆທີ່ກ່າວມາຂ້າງເທິງນີ້ ຕໍ່ເດັກອາຍຸບໍ່ເຖິງສິບແປດປີ ກໍຖືວ່າເປັນການຄ້າມະນຸດ ເຖິງ ວ່າຈະບໍ່ມີການຕົວະຍົວະ, ຫຼອກລວງ, ການຂົ່ມຂູ່, ການບັງຄັບ ຫຼື ການຜູກມັດດ້ວຍໜີ້ສິນກໍຕາມ.

ການຄ້າມະນຸດ ມີຜົນກະທົບຕໍ່ຜູ້ຖືກເຄາະຮ້າຍ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດ ຖະກິດ ແລະ ສັງຄົມ ສະແດງອອກດັ່ງນີ້:

**- ຜົນກະທົບທາງດ້ານຮ່າງກາຍ**

ຜົນກະທົບທາງດ້ານຮ່າງກາຍ ແມ່ນການບາດເຈັບ, ບອບຊໍ້າ ພາຍໃນ ຫຼື ພາຍນອກຮ່າງກາຍ ແລະ ມັນສະໝອງ, ເສຍອົງຄະ, ພິການ, ຕິດເຊື້ອພະຍາດ, ເປັນບ້າ ຫຼື ເສຍຊີວິດ ຊຶ່ງເກີດຈາກການກະທຳຂອງການຄ້າ ມະນຸດ.

**- ຜົນກະທົບທາງດ້ານຈິດໃຈ**

ຜົນກະທົບທາງດ້ານຈິດໃຈ ແມ່ນການປ່ຽນແປງດ້ານອາລົມ ເຊັ່ນ ກັງວົນ, ຫງຸດຫງິດ, ໃຈຮ້າຍ, ແຂງ ກະດ້າງ, ໂມໂຫ, ຊຶມເສົ້າ, ລະແວງສົງໄສ, ຢ້ານກົວ, ເຫັນພາບຫຼອກຫຼອນ, ຄວບຄຸມຕົນເອງບໍ່ໄດ້, ມີບັນຫາ ດ້ານການປັບຕົວ, ມີບຸກຄະລິກກະພາບແບບຍິນຍອມ ຫຼື ອາໄສແຕ່ຜູ້ອື່ນ, ມີປົມດ້ອຍຕິດຕົວ, ຄິດວ່າຕົນເອງ ບໍ່ຄືໝູ່, ຮູ້ສຶກຜິດ, ຕົນເອງບໍ່ດີ, ຕົນເອງບໍ່ມີຄຸນຄ່າ, ບໍ່ເປັນມິດກັບໃຜ, ມັກຢູ່ຄົນດຽວ, ແຍກຕົນອອກຈາກ ໝູ່ຄູ່, ຖືກປ່ອຍປະ, ຖືກຈຳແນກຈາກສັງຄົມ, ອັບອາຍ, ເສຍຈິດ, ເສຍໃຈ, ເສຍກຽດສັກສີ, ມີອາລົມຈິດທາງ ເພດ, ສູນເສຍຄວາມຊົງຈຳ, ບໍ່ນັບຖືຕົນເອງ, ມັກທຳຮ້າຍຕົນເອງ ອາດນຳໄປສູ່ການຂ້າຕົວຕາຍ ຊຶ່ງເກີດຈາກ ການກະທຳຂອງການຄ້າມະນຸດ.

**- ຜົນກະທົບທາງເພດ**

ຜົນກະທົບທາງເພດ ແມ່ນອະໄວຍະວະສືບພັນຖືກທຳລາຍ, ມີຄວາມສ່ຽງສູງຕໍ່ການຕິດເຊື້ອພະຍາດຕິດ ຕໍ່ທາງເພດສຳພັນ ເປັນຕົ້ນ ເຮສໄອວີ, ໄວຣັດຕັບ, ຖືພາໂດຍບໍ່ຕັ້ງໃຈ ແລະ ບໍ່ປອດໄພ, ມີພຶດຕິກຳທາງເພດ ທີ່ບໍ່ເໝາະສົມ, ການຈະເລີນເຕີບໂຕທາງຮ່າງກາຍ ແລະ ເພດຜິດປົກກະຕິ ຊຶ່ງເກີດຈາກການກະທຳຂອງການຄ້າ ມະນຸດ.

**- ຜົນກະທົບທາງດ້ານຊັບສິນ ຫຼື ເສດຖະກິດ**

ຜົນກະທົບທາງດ້ານຊັບສິນ ຫຼື ເສດຖະກິດ ແມ່ນຄວາມເສຍຫາຍຕໍ່ຊັບສິນຂອງຜູ້ຖືກເຄາະຮ້າຍ ເຮັດ ໃຫ້ເສຍອະນາຄົດ, ເສຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນ ເປັນຕົ້ນການບໍ່ໄດ້ຮັບຄ່າແຮງງານ, ໄດ້ຮັບຄ່າແຮງງານບໍ່ສົມກັບການອອກແຮງງານ, ບໍ່ໄດ້ຮັບສະຫວັດດີການສັງຄົມ, ເຮັດໃຫ້ມີໜີ້ສິນ, ບໍ່ມີອາຊີບ ໝັ້ນຄົງ, ສູນເສຍຊັບສິນສ່ວນຕົວ ແລະ ຄອບຄົວ, ເຮັດໃຫ້ຂາດກຳລັງແຮງງານໃນການພັດທະນາເສດຖະກິດ ຂອງຊາດ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

**- ຜົນກະທົບທາງດ້ານສັງຄົມ**

ຜົນກະທົບທາງດ້ານສັງຄົມແມ່ນປາກົດການຫຍໍ້ທໍ້ ແລະ ອາຊະຍາກຳທີ່ທຳລາຍວັດທະນະທຳ, ຮີດຄອງ ປະເພນີອັນດີງາມຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງເກີດຈາກການ ກະທຳຂອງການຄ້າມະນຸດ.

## ພາກທີ II
## ຫຼັກການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ

ການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ປະຕິບັດຕາມຫຼັກການຕ່າງໆ ດັ່ງນີ້:
- ຫຼັກການມະນຸດສະທຳ;
- ຫຼັກການສະເໝີພາບ;
- ຫຼັກການຖືສິດຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ;
- ຫຼັກການຮັກສາຄວາມລັບ ແລະ ຄວາມປອດໄພ;
- ຫຼັກການສ້າງຄວາມເຂັ້ມແຂງແກ່ຜູ້ຖືກເຄາະຮ້າຍ;
- ຫຼັກການປະສານສົມທົບ, ພົວພັນ ແລະ ຮ່ວມມືກັບສາກົນ.

**1. ຫຼັກການມະນຸດສະທຳ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຮັດໜ້າທີ່ໃນການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງຖືເອົາສິດຄວາມເປັນມະນຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ, ມີຈັນຍາບັນ, ຈັນຍາທຳ ແລະ ດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ທັນການ.

**2. ຫຼັກການສະເໝີພາບ**

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທຸກຄົນ ມີສິດເທົ່າທຽມກັນໃນການໄດ້ຮັບການປົກປ້ອງ ໂດຍບໍ່ຈຳແນກ ຖານະທາງດ້ານເສດຖະກິດ, ການເມືອງ, ສັງຄົມ, ສັນຊາດ, ເພດ, ໄວ, ພາສາ, ສາສະໜາ ແລະ ສະຖານະພາບອື່ນໆ.

**3. ຫຼັກການຖືສິດຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ**

ໃນການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດນັ້ນ ໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງຖືເອົາສິດ, ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍເປັນໃຈກາງ ບົນພື້ນຖານຄວາມສະໝັກໃຈ ແລະ ການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ ລວມມີການໄດ້ຮັບການຊ່ວຍເຫຼືອອັນຈຳເປັນ 06 ດ້ານ (ດ້ານການພັກເຊົາ, ດ້ານກົດໝາຍ, ດ້ານການແພດ, ດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ, ດ້ານເສດຖະກິດ, ການກັບຄືນສູ່ຄອບຄົວ ແລະ ສັງຄົມ).

**4. ຫຼັກການຮັກສາຄວາມລັບ ແລະ ຄວາມປອດໄພ**

ໃນການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງເຄົາລົບຄວາມເປັນສ່ວນຕົວ, ມີຈັນຍາບັນ, ຈັນຍາທຳ ເປັນຕົ້ນ ຊື່ ແລະ ນາມສະກຸນ, ທີ່ຢູ່, ຮູບປະພັນ ແລະ ຂໍ້ມູນອື່ນໆຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ກ່ຽວ ລວມທັງຄອບຄົວຂອງເຂົາເຈົ້າ ແລະ ຫ້າມເປີດເຜີຍຕໍ່ສາທາລະນະຊົນ ຫຼື ສື່ມວນຊົນ.

**5. ຫຼັກການສ້າງຄວາມເຂັ້ມແຂງໃຫ້ຜູ້ຖືກເຄາະຮ້າຍ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຮັດໜ້າທີ່ໃນການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ ຕ້ອງຖືເປັນ ວຽກບຸລິມະສິດໃນການສ້າງຄວາມເຂັ້ມແຂງດ້ານຈິດໃຈ, ດ້ານການສຶກສາ, ດ້ານວິຊາຊີບ ແລະ ມີວຽກເຮັດງານທຳ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອໃຫ້ເຂົາເຈົ້າມີລາຍຮັບໝັ້ນທ່ຽງ, ຊີວິດການເປັນຢູ່ດີຂຶ້ນ, ສາມາດກັບຄືນສູ່ຄອບຄົວ ແລະ ສັງຄົມເປັນປົກກະຕິ ທັງເປັນການປ້ອງກັນບໍ່ໃຫ້ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍຊ້ຳອີກ.

**ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືກເຄາະຮ້າຍແຕ່ລະດ້ານມີດັ່ງນີ້:**

- ການສ້າງຄວາມເຂັ້ມແຂງດ້ານຈິດໃຈ ແມ່ນການໃຫ້ກຳລັງໃຈ, ຄວາມອົບອຸ່ນ, ຄວາມເຂົ້າໃຈ, ອະທິບາຍຊີ້ແຈງເຫດຜົນ, ຮ່ວມຊອກທາງອອກ, ວິທີການແກ້ໄຂທີ່ຖືກຕ້ອງເໝາະສົມແກ່ຜູ້ຖືກເຄາະຮ້າຍ ເພື່ອເຮັດໃຫ້ເຂົາເຈົ້າມີຈິດໃຈເຂັ້ມແຂງສາມາດຜ່ານຜ່າວິກິດການໄປໄດ້.

- ການສ້າງຄວາມເຂັ້ມແຂງດ້ານການສຶກສາ ແມ່ນການສ້າງເງື່ອນໄຂ ແລະ ໃຫ້ໂອກາດ ແກ່ຜູ້ຖືກເຄາະຮ້າຍ ໄດ້ຮັບການສຶກສາຂັ້ນພື້ນຖານ ທັງໃນ ແລະ ນອກໂຮງຮຽນ.

- ການສ້າງຄວາມເຂັ້ມແຂງດ້ານວິຊາຊີບ ແລະ ວຽກເຮັດງານທຳ ແມ່ນການຝຶກອົບຮົມວິຊາຊີບ ແລະ ຊອກວຽກເຮັດງານທຳໃຫ້ຜູ້ຖືກເຄາະຮ້າຍ ຕາມເງື່ອນໄຂຕົວຈິງ ເປັນຕົ້ນ ວິຊາຊີບການປຸງແຕ່ງອາຫານ, ການໂຮງແຮມ, ຕັດຫຍິບ, ເສີມສວຍ, ຫັດຖະກຳ, ສ້ອມແປງ, ປູກຝັງ, ລ້ຽງສັດ ແລະ ອື່ນໆ.

**6. ຫຼັກການປະສານສົມທົບ, ພົວພັນ ແລະ ຮ່ວມມືສາກົນ.**

ການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ແມ່ນຄວາມຮັບຜິດຊອບຂອງທຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ມີການປະສານສົມທົບກັນຢ່າງກົມກຽວ ລວມທັງການພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຕ້ານການຄ້າມະນຸດ.

# ພາກທີ III
# ການປົກປ້ອງຜູ້ຖືກເຄາະຮ້າຍ

ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມມີວຽກ ການກອບກູ້, ການສົ່ງຕໍ່, ການຮັກສາຄວາມປອດໄພ ແລະ ການຮັກສາຄວາມລັບ (ສໍາລັບການສົ່ງຕໍ່ໄດ້ກໍານົດໃນພາກທີ V ຂອງຄູ່ມືສະບັບນີ້).

## ໝວດທີ 1
## ການກອບກູ້

ການກອບກູ້ ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມມີວຽກ ແຈ້ງຄວາມ, ຮັບແຈ້ງຄວາມ, ຄວາມຮັບຜິດຊອບໃນການກອບກູ້ ແລະ ການກໍານົດຕົວ.

### I. ການແຈ້ງຄວາມ ແລະ ການຮັບແຈ້ງຄວາມ

#### 1. ການແຈ້ງຄວາມ

ການແຈ້ງຄວາມແມ່ນການໃຫ້ຂໍ້ມູນກ່ຽວກັບການຄ້າມະນຸດ ຊຶ່ງສາມາດດໍາເນີນໄດ້ທາງປາກເປົ່າ ຫຼື ເປັນລາຍລັກອັກສອນ.

• **ຜູ້ມີສິດ ແລະ ພັນທະແຈ້ງຄວາມ ມີດັ່ງນີ້:**

- ຜູ້ຖືກເຄາະຮ້າຍເອງ;
- ສະມາຊິກຄອບຄົວຂອງຜູ້ຖືກເຄາະຮ້າຍ;
- ຍາດພີ່ນ້ອງໃກ້ຊິດ, ບຸກຄົນໃກ້ຄຽງ, ບຸກຄົນອື່ນ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮູ້, ເຫັນ ຫຼື ໄດ້ຮັບຂໍ້ມູນ, ແຫຼ່ງຂ່າວ ກ່ຽວກັບການຄ້າມະນຸດ;
- ຜູ້ພົບເຫັນຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ມີຂໍ້ມູນຫຼັກຖານກ່ຽວກັບການຄ້າມະນຸດ.

• **ໃນການແຈ້ງຄວາມເປັນລາຍລັກອັກສອນ ຜູ້ແຈ້ງຄວາມຕ້ອງບອກເນື້ອໃນຕົ້ນຕໍ ດັ່ງນີ້:**

- ສະຖານທີ່, ວັນ, ເວລາ, ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ຊັ້ນຕໍາແໜ່ງຂອງຕົນ;
- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ຖືກເຄາະຮ້າຍ, ພໍ່ແມ່, ຜູ້ປົກຄອງຂອງຜູ້ຖືກເຄາະຮ້າຍ;
- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ສົງໄສວ່າເປັນຜູ້ຄ້າມະນຸດ;
- ເລົ່າເຫດການທີ່ເກີດຂຶ້ນ ເຊັ່ນ ເວລາ, ວັນເດືອນປີ, ສະຖານທີ່ເກີດເຫດການ, ມີຜູ້ໃດຮູ້ເຫັນນໍາ, ຮ່ອງຮອຍ, ຮູບຖ່າຍທີ່ກ່ຽວຂ້ອງ ແລະ ຂໍ້ມູນຫຼັກຖານອື່ນໆ.

#### 2. ການຮັບແຈ້ງຄວາມ

ການຮັບແຈ້ງຄວາມແມ່ນການບັນທຶກຂໍ້ມູນຕ່າງໆກ່ຽວກັບການຄ້າມະນຸດທີ່ຜູ້ແຈ້ງຄວາມສະໜອງໃຫ້.

• **ຜູ້ມີສິດຮັບແຈ້ງຄວາມກ່ຽວກັບການຄ້າມະນຸດ ມີດັ່ງນີ້:**

- ເຈົ້າໜ້າທີ່ຕໍາຫຼວດ;
- ໃນກໍລະນີຈໍາເປັນ, ຮີບດ່ວນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ກໍສາມາດຮັບແຈ້ງຄວາມ ແລ້ວລາຍງານໃຫ້ເຈົ້າໜ້າທີ່ຕໍາຫຼວດໃນທັນໃດ ເພື່ອກອບກູ້, ຊ່ວຍເຫຼືອຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍ ແລະ ດໍາເນີນຄະດີຕໍ່ຜູ້ຖືກຫາ ຕາມກົດໝາຍ.

- **ການຮັບແຈ້ງຄວາມແຕ່ລະຄັ້ງໃຫ້ຜູ້ຮັບແຈ້ງຄວາມເຮັດບົດບັນທຶກການຮັບແຈ້ງຄວາມ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:**

- ສະຖານທີ່, ວັນ, ເວລາ, ຊື່ ແລະ ນາມສະກຸນ, ຊັ້ນຕໍາແໜ່ງຂອງຜູ້ຮັບແຈ້ງຄວາມ;

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ຖືກເຄາະຮ້າຍ, ພໍ່ແມ່, ຜູ້ປົກຄອງຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ແຈ້ງຄວາມ;

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ສົງໄສວ່າເປັນຜູ້ຄ້າມະນຸດ;

- ການບັນທຶກເຫດການທີ່ເກີດຂຶ້ນ ຕາມການບອກເລົ່າຂອງຜູ້ແຈ້ງຄວາມ ເຊັ່ນ ເວລາ, ວັນເດືອນປີ, ສະຖານ ທີ່, ມີຜູ້ໃດຮູ້ເຫັນນໍາ, ຮ່ອງຮອຍ, ຮູບຖ່າຍທີ່ກ່ຽວຂ້ອງ ແລະ ຂໍ້ມູນຫຼັກຖານອື່ນ.

ພາຍຫຼັງທີ່ໄດ້ຮັບແຈ້ງຄວາມ, ເຮັດບົດບັນທຶກການຮັບແຈ້ງຄວາມສໍາເລັດແລ້ວ ຜູ້ຮັບແຈ້ງຄວາມຕ້ອງອ່ານເນື້ອໃນບົດບັນທຶກນັ້ນ ໃຫ້ຜູ້ແຈ້ງຄວາມ ແລະ ຜູ້ເຂົ້າຮ່ວມອື່ນຟັງ ແລ້ວໃຫ້ຜູ້ແຈ້ງຄວາມ ແລະ ຜູ້ເຂົ້າຮ່ວມອື່ນລົງລາຍເຊັນ ແລະ ແປະໂປ້ມືໃສ່ບົດບັນທຶກດັ່ງກ່າວ. ສໍາລັບຜູ້ຮັບການແຈ້ງຄວາມແມ່ນໃຫ້ລົງລາຍເຊັນໃສ່ຕາມລະບຽບການ.

## II. ຄວາມຮັບຜິດຊອບໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ

### 1. ຄວາມຮັບຜິດຊອບໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພາຍໃນປະເທດ

ເຈົ້າໜ້າທີ່ຕໍາຫຼວດ, ທະຫານຊາຍແດນ, ກະຊວງການຕ່າງປະເທດ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ, ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ໃນການກອບກູ້ເອົາຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມແຕ່ລະກໍລະນີດັ່ງນີ້:

**1). ເຈົ້າໜ້າທີ່ຕໍາຫຼວດ:**

**- ກໍລະນີເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ** ໄດ້ຮັບແຈ້ງຄວາມຈາກບຸກຄົນ, ນິຕິບຸກ ຄົນ ຫຼື ການຈັດຕັ້ງ ຫຼື ມີການເຂົ້າມອບຕົວຂອງຜູ້ກະທໍາຜິດ ຫຼື ພົບເຫັນຮ່ອງຮອຍຂອງການກະທໍາຜິດກ່ຽວກັບການຄ້າມະນຸດແລ້ວ ຕ້ອງຮີບຮ້ອນຈັດວາງກໍາລັງເຂົ້າສະກັດກັ້ນ ແລະ ກອບກູ້ ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍໃຫ້ທັນການ ພ້ອມທັງສົ່ງຜູ້ກ່ຽວໄປຍັງສະຖານທີ່ພັກເຊົາທີ່ປອດໄພ. ສໍາລັບຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທໍາຜິດ ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ;

**- ກໍລະນີເຈົ້າໜ້າທີ່ຕໍາຫຼວດກໍາລັງວິຊາສະເພາະອື່ນ** (ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ຕໍາຫຼວດທ່ອງທ່ຽວ, ຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ, ຕໍາຫຼວດຄຸ້ມຄອງສໍາມະໂນຄົວ, ຕໍາຫຼວດບໍລິການປະຊາຊົນ ແລະ ກໍາລັງຕໍາຫຼວດ ວິຊາສະເພາະອື່ນ) ໄດ້ຮັບແຈ້ງຄວາມຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ມີການເຂົ້າມອບຕົວຂອງຜູ້ກະທໍາຜິດ ຫຼື ພົບເຫັນຮ່ອງຮອຍຂອງການກະທໍາຜິດກ່ຽວກັບການຄ້າມະນຸດແລ້ວ ຕ້ອງຮີບຮ້ອນເຂົ້າໄປກອບກູ້ເອົາຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ, ຄຸມຕົວຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທໍາຜິດຢູ່ກັບທີ່ ແລະ ປ້ອງກັນສະຖານທີ່ເກີດເຫດ, ພ້ອມທັງປະສານສົມທົບກັບຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ສະຫະພັນແມ່ຍິງລາວ ເພື່ອນໍາສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໄປຍັງສະຖານທີ່ພັກເຊົາທີ່ປອດໄພ ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບເຫດການແກ່ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ. ສໍາລັບຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທໍາຜິດ ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

**2). ກໍລະນີທະຫານຊາຍແດນ** ໄດ້ຮັບແຈ້ງຄວາມຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ມີການ

ເຂົ້າມອບ ຕົວຂອງຜູ້ກະທຳຜິດ ຫຼື ພົບເຫັນຮ່ອງຮອຍຂອງການກະທຳຜິດກ່ຽວກັບການຄ້າມະນຸດແລ້ວ ຕ້ອງຮີບຮ້ອນເຂົ້າໄປກອບກູ້ເອົາ ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ, ຄຸມຕົວຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທຳຜິດ ຢູ່ກັບທີ່ ແລະ ປ້ອງກັນສະຖານທີ່ເກີດເຫດ, ພ້ອມທັງປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ສະຫະພັນແມ່ຍິງລາວ ບ່ອນໃກ້ຄຽງທີ່ສຸດ ເພື່ອນຳສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ໄປຍັງສະຖານທີ່ພັກເຊົາທີ່ປອດໄພ ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບເຫດການ ແກ່ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ. ສຳລັບຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທຳຜິດ ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**3). ກໍລະນີກະຊວງການຕ່າງປະເທດ** ໄດ້ຮັບການແຈ້ງຄວາມຈາກສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ຂອງຕ່າງປະເທດ ປະຈຳຢູ່ ສປປ ລາວ ກ່ຽວກັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ ສປປ ລາວ ໃຫ້ກະຊວງການຕ່າງປະເທດ ຮີບຮ້ອນແຈ້ງຂໍ້ມູນໄປຍັງ ກະຊວງປ້ອງກັນຄວາມສະຫງົບ ເພື່ອດຳເນີນການຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**4). ກໍລະນີອົງການປົກຄອງບ້ານ** ໄດ້ພົບເຫັນ ຫຼື ສົງໄສວ່າມີເຫດການຄ້າມະນຸດເກີດຂຶ້ນຢູ່ພາຍໃນບ້ານຂອງຕົນ ຕ້ອງຮີບຮ້ອນປະສານສົມທົບກັບຕຳຫຼວດບໍລິການປະຊາຊົນ ເຂົ້າໄປກອບກູ້ເອົາຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ນຳສົ່ງຜູ້ກ່ຽວໄປຍັງສະຖານທີ່ພັກເຊົາທີ່ປອດໄພ, ຄຸມຕົວຜູ້ຖືກສົງໄສວ່າເປັນຜູ້ພົວພັນກັບການກະທຳຜິດຢູ່ກັບທີ່ ແລະ ປ້ອງກັນສະຖານທີ່ເກີດເຫດ, ສະໜອງຂໍ້ມູນ, ຫຼັກຖານ ທີ່ກ່ຽວຂ້ອງກັບເຫດການດັ່ງກ່າວ ພ້ອມທັງລາຍງານໃຫ້ກອງບັນຊາການ ປກສ ເມືອງ ຫຼື ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ກອງບັນຊາການ ປກສ ແຂວງ.

## 2. ຄວາມຮັບຜິດຊອບໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ຕ່າງປະເທດ

ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ມີຄວາມຮັບຜິດຊອບ ໃນການກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມແຕ່ລະກໍລະນີດັ່ງນີ້:

**- ກໍລະນີສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ :**

+ ເມື່ອໄດ້ຮັບແຈ້ງຄວາມກ່ຽວກັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຜູ້ຖືກເຄາະຮ້າຍ ທີ່ເປັນພົນລະເມືອງລາວ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງປະເທດທີ່ຕົນປະຈຳຢູ່ນັ້ນ ໃຫ້ຮີບຮ້ອນແຈ້ງໄປຍັງເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດດັ່ງກ່າວ ເພື່ອເຂົ້າໄປກອບກູ້ເອົາ, ດຳເນີນການສຳພາດ ເພື່ອກຳນົດຕົວຜູ້ຖືກເຄາະຮ້າຍເບື້ອງຕົ້ນ ແລະ ສົ່ງໄປຍັງສະຖານທີ່ພັກເຊົາທີ່ປອດໄພ, ພ້ອມທັງໃຫ້ການຊ່ວຍເຫຼືອອັນຈຳເປັນແກ່ຜູ້ກ່ຽວ ແລະ ໃຫ້ສືບຕໍ່ຕິດຕາມ, ຊ່ວຍເຫຼືອ, ເກັບກຳຂໍ້ມູນ, ຫຼັກຖານ ທີ່ສາມາດເກັບກຳໄດ້ ແຈ້ງໃຫ້ຫ້ອງການກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຂອງ ສປປ ລາວ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອດຳເນີນການຈັດສົ່ງກັບຄືນປະເທດຢ່າງປອດໄພ.

+ ເມື່ອໄດ້ຮັບແຈ້ງຄວາມ ຫຼື ໄດ້ຮັບຂໍ້ມູນຈາກການຈັດຕັ້ງ ຫຼື ຈາກຜູ້ປົກຄອງ, ຍາດໃກ້ຊິດຂອງຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ ສປປ ລາວ ໂດຍຜ່ານຂະແໜງການການຕ່າງປະເທດ ແມ່ນໃຫ້ພາກ ສ່ວນດັ່ງກ່າວປະສານສົມທົບກັບເຈົ້າໜ້າທີ່ປະເທດກ່ຽວຂ້ອງ ເພື່ອກອບກູ້ ແລະ ໃຫ້ການຊ່ວຍເຫຼືອອັນຈຳເປັນແກ່ຜູ້ກ່ຽວ (ກໍລະນີມີສົນທິສັນຍາ, ສັນຍາ, ບົດບັນທຶກຄວາມເຂົ້າໃຈ ສອງຝ່າຍ ຫຼື ຫຼາຍຝ່າຍ ແມ່ນໃຫ້ປະຕິບັດຕາມ ສົນທິສັນຍາ, ສັນຍາ, ບົດບັນທຶກຄວາມເຂົ້າໃຈດັ່ງກ່າວ).

**- ກໍລະນີຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຜູ້ຖືກເຄາະຮ້າຍ ທີ່ເປັນພົນລະເມືອງລາວ** ເຂົ້າໄປຂໍຄວາມຊ່ວຍເຫຼືອຈາກສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດນັ້ນ ໃຫ້ພາກສ່ວນດັ່ງກ່າວອໍານວຍຄວາມສະດວກໃຫ້ການຊ່ວຍເຫຼືອອັນຈໍາເປັນ ລວມທັງດໍາເນີນການສໍາພາດ, ເກັບກໍາຂໍ້ມູນ, ຫຼັກຖານ ເພື່ອກໍານົດຕົວຜູ້ຖືກເຄາະຮ້າຍເບື້ອງຕົ້ນ ສົ່ງໃຫ້ຫ້ອງການກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ຂອງ ສປປ ລາວ ເພື່ອດໍາເນີນການຈັດສົ່ງກັບຄືນປະເທດຢ່າງປອດໄພ.

- ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດຢູ່ ສປປ ລາວ ມີສິດສະເໜີຂໍຄວາມຊ່ວຍເຫຼືອຈາກສະຖານ ທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດນັ້ນ ໃຫ້ພາກສ່ວນດັ່ງກ່າວອໍານວຍຄວາມສະດວກໃຫ້ການຊ່ວຍເຫຼືອອັນຈໍາເປັນ ລວມທັງດໍາເນີນການສໍາພາດ, ເກັບກໍາຂໍ້ມູນ, ຫຼັກຖານ ເພື່ອກໍານົດຕົວຜູ້ຖືກເຄາະຮ້າຍເບື້ອງຕົ້ນ ສົ່ງໃຫ້ຫ້ອງການກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ຂອງສປປ ລາວ ເພື່ອດໍາເນີນການຈັດສົ່ງກັບຄືນປະເທດຢ່າງປອດໄພ.

**. ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍພື້ນຖານແມ່ນໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

**1. ການກໍານົດຕົວເບື້ອງຕົ້ນ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

ອົງການປົກຄອງບ້ານ, ເຈົ້າໜ້າທີ່ຕໍາຫຼວດບໍລິການປະຊາຊົນ, ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ທະຫານຊາຍແດນ, ອົງການຈັດຕັ້ງມະຫາຊົນ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຈັດ ຕັ້ງອື່ນທີ່ກ່ຽວຂ້ອງ ມີໜ້າທີ່ສໍາພາດຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍນໍາໃຊ້ຄູ່ມືການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສະບັບປີ 2016 ແລະ ແບບພິມສໍາພາດທີ່ມີຢູ່ໃນເອກະສານຊ້ອນທ້າຍຂອງຄູ່ມືສະບັບນີ້ ແລະ ເກັບກໍາຂໍ້ມູນເບື້ອງຕົ້ນ.

ພາຍຫຼັງສໍາພາດ ແລະ ເກັບກໍາຂໍ້ມູນເບື້ອງຕົ້ນສໍາເລັດແລ້ວ ອົງການທີ່ເຮັດໜ້າທີ່ສໍາພາດຕ້ອງມີການສົມທຽບຂໍ້ມູນທີ່ປະເມີນເບື້ອງຕົ້ນກັບຜົນຂອງການສໍາພາດ ເພື່ອຢັ້ງຢືນການກໍານົດຕົວເບື້ອງຕົ້ນ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່.

**2. ການຢັ້ງຢືນວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

ເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ດໍາເນີນການສໍາພາດເບື້ອງຕົ້ນດ້ວຍຕົນເອງ ຫຼື ດໍາເນີນການພິສູດຂໍ້ມູນທີ່ໄດ້ຈາກການສໍາພາດ, ຈາກການເກັບກໍາຂໍ້ມູນເບື້ອງຕົ້ນຂອງພາກສ່ວນທີ່ກໍານົດຕົວເບື້ອງຕົ້ນສົ່ງໃຫ້ນັ້ນໃຫ້ລະອຽດຈະແຈ້ງ, ລົງຄໍາເຫັນເປັນລາຍລັກອັກສອນ ແລະ ອອກໃບຢັ້ງຢືນວ່າ ເປັນ ຫຼື ບໍ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

- ຖ້າເປັນ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນມອບໃຫ້ສະຫະ ພັນແມ່ຍິງລາວ ເປັນຜູ້ໃຫ້ການຊ່ວຍເຫຼືອອັນຈໍາເປັນເບື້ອງຕົ້ນ ແລະ ຮັບປະກັນສິດຂອງຜູ້ຖືກເຄາະຮ້າຍຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ;

- ຖ້າບໍ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ເປັນກຸ່ມສ່ຽງຈາກການຄ້າມະນຸດ ແມ່ນໃຫ້ປະສານສົມ ທົບກັບອົງການປົກຄອງທ້ອງຖິ່ນ ໃນການນໍາສົ່ງຜູ້ກ່ຽວໃຫ້ຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ ແລະ ອົງການປົກ ຄອງບ້ານ, ພາກສ່ວນກ່ຽວຂ້ອງ ເພື່ອສືບຕໍ່ສຶກສາອົບຮົມ, ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອ.

ໃນກໍລະນີຜູ້ກ່ຽວຫາກຕ້ອງການຝຶກອົບຮົມວິຊາຊີບ, ພັດທະນາສີມືແຮງງານ ແລະ ຊອກວຽກເຮັດງານທໍາ ແມ່ນ ມອບໃຫ້ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ປະສານສົມທົບກັບອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ ເປັນຜູ້ສືບຕໍ່ໃຫ້ການຊ່ວຍເຫຼືອຕາມແຕ່ລະກໍລະນີ.

- ຖ້າບໍ່ເປັນ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ເປັນການເຂົ້າ-ອອກເມືອງຜິດກົດໝາຍ ຫຼື ອື່ນໆ ແມ່ນໃຫ້ປະຕິບັດຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກຳນົດໄວ້.

## ໝວດທີ 2
## ການຮັກສາຄວາມປອດໄພ ແລະ ການຮັກສາຄວາມລັບ

### I. ການຮັກສາຄວາມປອດໄພ

ການຮັກສາຄວາມປອດໄພໃນແຕ່ລະໄລຍະໃຫ້ປະຕິບັດດັ່ງນີ້:

### 1. ໄລຍະການກອບກູ້ ແລະ ນຳສົ່ງ

ໄລຍະການກອບກູ້ແລະນຳສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຫຼືຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄປຍັງສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພນັ້ນ ການຮັບປະກັນຄວາມປອດໄພຮອບດ້ານ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ກອບກູ້ ແລະ ນຳສົ່ງ ໂດຍຈັດຕັ້ງໃຫ້ມີບຸກຄະລາກອນ, ພາຫະນະ ແລະ ອຸປະກອນປ້ອງກັນຄັກແນ່.

### 2. ໄລຍະຢູ່ສະຖານທີ່ພັກເຊົາຊົ່ວຄາວ

ການຮັກສາຄວາມປອດໄພໃຫ້ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຫຼືຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢູ່ໃນສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພນັ້ນ ໃຫ້ມີເຈົ້າໜ້າທີ່ຕຳຫຼວດ ຫຼື ພະນັກງານຮັກສາຄວາມປອດໄພເວນຍາມຕະຫຼອດ 24 ຊົ່ວໂມງ, ພ້ອມທັງມີພະນັກງານຂອງສະຖານທີ່ພັກເຊົາຊົ່ວຄາວດັ່ງກ່າວ ປະຈຳການເຮັດໜ້າທີ່ເບິ່ງແຍງດູແລເປັນປົກກະຕິ.

ສຳລັບກຳນົດເວລາພັກເຊົາຊົ່ວຄາວ ຢູ່ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ແມ່ນບໍ່ໃຫ້ກາຍ ຫ້າວັນ ທັງຮັບປະກັນໃຫ້ມີຄວາມປອດໄພ.

### 3. ໄລຍະການດຳເນີນຄະດີ

ການຮັກສາຄວາມປອດໄພໄລຍະການດຳເນີນຄະດີຢູ່ພາຍໃນປະເທດ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແລະ ສະຫະພັນແມ່ຍິງລາວ ປະສານສົມທົບກັບອົງການໄອຍະການປະຊາຊົນ, ສານປະຊາຊົນ ບ່ອນດຳເນີນຄະດີ ເພື່ອປຶກສາຫາລືມາດຕະການຮັກສາຄວາມປອດໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມແຕ່ລະກໍລະນີດັ່ງນີ້:

- ກໍລະນີດຳເນີນຄະດີຢູ່ຂັ້ນອົງການສືບສວນ-ສອບສວນ: ໃນເວລາດຳເນີນການສືບສວນ-ສອບສວນເກັບກຳ ຂໍ້ມູນ, ຫຼັກຖານ ກ່ຽວກັບຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຈົ້າໜ້າທີ່ກ່ຽວຂ້ອງຕ້ອງປະສານສົມທົບກັບ ສະຫະພັນແມ່ຍິງລາວ ເພື່ອອຳນວຍຄວາມສະດວກ ແລະ ຮັກສາຄວາມປອດໄພໃຫ້ຜູ້ກ່ຽວ.
- ກໍລະນີດຳເນີນຄະດີຢູ່ຂັ້ນອົງການໄອຍະການປະຊາຊົນ: ໃນເວລາອອກໝາຍຮຽກໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຂົ້າມາໃຫ້ການເພີ່ມເຕີມຕ້ອງຮັບປະກັນຄວາມປອດໄພ, ຫຼີກລ້ຽງບໍ່ໃຫ້ຜູ້ຖືກເຄາະຮ້າຍປະເຊີນໜ້າກັບຄູ່ກໍລະນີ.
- ກໍລະນີດຳເນີນຄະດີຢູ່ຂັ້ນສານປະຊາຊົນ: ໃນເວລານຳເອົາຜູ້ຖືກເຄາະຮ້າຍເຂົ້າຮ່ວມປະຊຸມສານ ຕ້ອງຈັດໃຫ້ມີຫ້ອງລໍຖ້າ, ໃນເວລາໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນໃຫ້ມີແນວກັ້ນບັງ ເພື່ອບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຈຳເລີຍ ເບິ່ງເຫັນກັນ, ຫຼີກລ້ຽງການຂົ່ມຂູ່ຂອງຈຳເລີຍ.

**- ກໍລະນີຢູ່ຂັ້ນບ້ານ:** ການດຳເນີນຄະດີບໍ່ທັນສຳເລັດແຕ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ກັບຄືນສູ່ຄອບຄົວ ແລະ ສັງຄົມ, ການຮັກສາຄວາມປອດໄພ ໃຫ້ພວກກ່ຽວ ລວມທັງພໍ່ແມ່, ຍາດພີ່ນ້ອງ, ຄອບຄົວ ຂອງພວກກ່ຽວ ແມ່ນມອບຄວາມຮັບຜິດຊອບໃຫ້ອົງການປົກຄອງບ້ານ ແລະ ເຈົ້າໜ້າທີ່ຕຳຫຼວດບໍລິການປະຊາຊົນ.

**- ກໍລະນີການປິ່ນປົວຢູ່ໂຮງໝໍ:** ເມື່ອມີຄວາມຈຳເປັນເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄປປິ່ນປົວສຸຂະພາບຢູ່ໂຮງໝໍ ໃນໄລຍະການດຳເນີນຄະດີນັ້ນ, ແພດໝໍ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ເພື່ອຮັບປະກັນຄວາມປອດໄພ.

**4. ໄລຍະໄປໃຫ້ການ ຫຼື ເຂົ້າຮ່ວມປະຊຸມສານຢູ່ຕ່າງປະເທດ**

ການຮັກສາຄວາມປອດໄພ ແລະ ການນຳພາຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄປໃຫ້ການ ຫຼື ເຂົ້າຮ່ວມປະຊຸມສານຢູ່ຕ່າງປະເທດ ແມ່ນຄວາມຮັບຜິດຊອບຂອງກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກົມໃຫຍ່ ຕຳຫຼວດ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ອົງການໄອຍະການປະຊາຊົນສູງສຸດ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ປະຈຳຢູ່ປະເທດນັ້ນ ແລະ ເຈົ້າໜ້າທີ່ປະເທດກ່ຽວຂ້ອງ.

**5. ໄລຍະການນຳສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ**

ການຮັກສາຄວາມປອດໄພໃຫ້ແກ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຫຼືຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄລຍະການນຳສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງສະຫະພັນແມ່ຍິງ ລາວ ປະສານສົມທົບກັບກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ; ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ຫ້ອງຕຳຫຼວດ, ກອງບັນຊາການ ປກສ ແຂວງ; ກອງຄະດີ, ພະແນກຕຳຫຼວດ ກອງບັນຊາການ ປກສ ເມືອງ ລວມທັງອົງການປົກຄອງທ້ອງຖິ່ນ.

**II. ການຮັກສາຄວາມລັບ**

ການຮັກສາຄວາມລັບຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ນອກຈາກປະຕິບັດຕາມຫຼັກການຮັກສາຄວາມລັບ ທີ່ໄດ້ກຳນົດໄວ້ໃນພາກທີ II, ຂໍ້ 4 ເທິງນີ້ແລ້ວ ຍັງຕ້ອງໄດ້ເອົາໃຈໃສ່ຮັກສາຄວາມລັບຂອງຂໍ້ມູນ, ຫຼັກຖານ ທີ່ພົວພັນກັບຄະດີ, ປະຫວັດ ແລະ ຈຸດພິເສດທາງດ້ານຮ່າງກາຍ, ບ່ອນພັກເຊົາຊົ່ວຄາວ, ບ່ອນຢູ່, ບ່ອນເຮັດວຽກ ແລະ ບ່ອນຮຽນ ຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

# ພາກທີ IV
# ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

## ໝວດທີ 1
## ການຊ່ວຍເຫຼືອແຕ່ລະດ້ານແກ່ຜູ້ຖືກເຄາະຮ້າຍທີ່ເປັນພົນລະເມືອງລາວ

ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍແມ່ນຜັນຂະຫຍາຍກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໝວດທີ V, ມາດຕາ 44-50 ຊຶ່ງລວມມີການຊ່ວຍເຫຼືອດ້ານການພັກເຊົາ, ກົດໝາຍ, ການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການກັບຄືນສູ່ຄອບຄົວ ແລະ ສັງຄົມ.

### 1. ການຊ່ວຍເຫຼືອດ້ານການພັກເຊົາ

ການຊ່ວຍເຫຼືອດ້ານການພັກເຊົາ ແມ່ນປະຕິບັດຕໍ່ສອງກຸ່ມເປົ້າໝາຍຄື ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ການຊ່ວຍເຫຼືອດ້ານການພັກເຊົາ ລວມມີ ບ່ອນພັກເຊົາຊົ່ວຄາວທີ່ປອດໄພ, ອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ເຄື່ອງໃຊ້ສອຍອັນຈຳເປັນໃນການດຳລົງຊີວິດປະຈຳວັນ ໃຫ້ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ແມ່ນບ່ອນຢູ່ອາໄສໄລຍະສັ້ນຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍມີການແຍກສະຖານທີ່ພັກເຊົາສຳລັບເພດຍິງ, ເພດຊາຍ, ເດັກ ຊຶ່ງມີການຮັກສາຄວາມປອດໄພຈາກເຈົ້າໜ້າທີ່ຕຳຫຼວດ ຫຼື ພະນັກງານຮັກສາຄວາມປອດໄພ ປ້ອງກັນເວນຍາມຕະຫຼອດ 24 ຊົ່ວໂມງ ແລະ ມີພະນັກງານຂອງສະຖານທີ່ພັກເຊົາຊົ່ວຄາວດັ່ງກ່າວ ທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບການບຳບັດຟື້ນຟູ, ດູແລຜູ້ຖືກເຄາະຮ້າຍ ແລະ ການຄຸ້ມຄອງບໍລິຫານສູນ ເປັນຜູ້ປະຈຳການເພື່ອເຮັດໜ້າທີ່ເບິ່ງແຍງດູແລເປັນປົກກະຕິ.

ການສະໜອງສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ແມ່ນຄວາມຮັບຜິດຊອບຂອງສະຫະພັນແມ່ຍິງແຕ່ລະຂັ້ນ, ອົງການປົກຄອງແຕ່ລະຂັ້ນ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ.

ການພັກເຊົາໄລຍະຍາວ ສຳລັບຜູ້ຖືກເຄາະຮ້າຍທີ່ບໍ່ສາມາດກັບຄືນສູ່ຄອບຄົວ ແລະ ສັງຄົມເດີມດ້ວຍເຫດຜົນໃດໜຶ່ງ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຕ້ອງການປະກອບວຽກເຮັດງານທຳ ຫຼື ຢາກຍົກລະດັບສີມືແຮງງານ, ຝຶກອົບຮົມວິຊາຊີບໄລຍະຍາວ ແມ່ນຄວາມຮັບຜິດຊອບຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ.

### 2. ການຊ່ວຍເຫຼືອດ້ານກົດໝາຍ

ການຊ່ວຍເຫຼືອດ້ານກົດໝາຍ ໃຫ້ປະຕິບັດດັ່ງນີ້:

- ການສະໜອງຂໍ້ມູນຂ່າວສານ, ໃຫ້ຄຳປຶກສາ, ແນະນຳທາງດ້ານກົດໝາຍ, ການຮ່າງເອກະສານ, ການປະກອບເອກະສານ, ການຮ້ອງຂໍເອົາຄ່າເສຍຫາຍທາງແພ່ງ, ການເຂົ້າຮ່ວມໃນການດຳເນີນຄະດີ, ກະກຽມຄວາມພ້ອມໃຫ້ຜູ້ຖືກເຄາະຮ້າຍກ່ອນ ແລະ ຫຼັງການດຳເນີນຄະດີ ທັງເປັນຜູ້ຕາງໜ້າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນການດຳເນີນ ຄະດີ ຊຶ່ງແມ່ນຄວາມຮັບຜິດຊອບຂອງສະຫະພັນແມ່ຍິງລາວ;

- **ການຢັ້ງຢືນສະຖານະພາບເປັນພົນລະເມືອງລາວ** ລວມທັງການພິສູດສັນຊາດລາວ, ການປະກອບເອກະສານເພື່ອອອກບັດປະຈຳຕົວ, ສຳມະໂນຄົວ, ແມ່ນຄວາມຮັບຜິດຊອບຂອງຂະແໜງການປ້ອງກັນຄວາມສະຫງົບ ໂດຍມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນກະຊວງການຕ່າງປະເທດ ແລະ ກະຊວງພາຍໃນ.

**- ການອອກເອກະສານເດີນທາງ** ໃຫ້ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ;

**- ປະສານງານກັບຕ່າງປະເທດ** ເພື່ອແລກປ່ຽນຂໍ້ມູນໃຫ້ແກ່ການດຳເນີນຄະດີ; ການມອບ-ຮັບ ແລະ ການສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກັບຄືນປະເທດ, ພ້ອມທັງຄຸ້ມຄອງບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ການຈັດຕັ້ງທາງສັງຄົມທີ່ເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ແມ່ນຄວາມຮັບຜິດຊອບຂອງກະຊວງ ການຕ່າງປະເທດ.

**- ການແຕ່ງຕັ້ງຜູ້ປົກປ້ອງອື່ນ** ເປັນຜູ້ຕາງໜ້າໃນການຕໍ່ສູ້ຄະດີໂດຍບໍ່ເສຍຄ່າ ຢູ່ພາຍໃນ ແລະ ຕ່າງປະເທດ ແມ່ນຄວາມຮັບຜິດຊອບຂອງສະຫະພັນແມ່ຍິງລາວ. ໃນກໍລະນີມີຄວາມຈຳເປັນສາມາດແຕ່ງຕັ້ງທະນາຍຄວາມໂດຍບໍ່ເສຍ ຄ່າຕາມການສະເໜີຂອງ ສູນກາງສະຫະພັນແມ່ຍິງລາວ ຫຼື ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ.

**- ການແຕ່ງຕັ້ງທະນາຍຄວາມເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນລາວ ຢູ່ຕ່າງປະເທດ** ແມ່ນກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເປັນຜູ້ສະເໜີເຖິງພາກສ່ວນກ່ຽວຂ້ອງຂອງປະເທດທີ່ກຳລັງດຳເນີນຄະດີໂດຍຜ່ານຊ່ອງທາງການທູດ.

**- ຄະນະຮັບຜິດຊອບນຳຕົວຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດໄປໃຫ້ການ ຫຼື ເຂົ້າຮ່ວມປະຊຸມສານຢູ່ຕ່າງປະເທດ** ປະກອບດ້ວຍ ເຈົ້າໜ້າທີ່ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກົມໃຫຍ່ຕຳຫຼວດ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ອົງການໄອຍະການປະຊາຊົນສູງສຸດ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ຕາມແຕ່ລະກໍລະນີ ໂດຍການແຕ່ງຕັ້ງຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຕາມການສະເໜີຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

ໃນກໍລະນີຢູ່ທ້ອງຖິ່ນ ກ່ອນນຳຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄປໃຫ້ການ ຫຼື ເຂົ້າຮ່ວມປະຊຸມສານຢູ່ຕ່າງປະເທດ ຕ້ອງລາຍງານໃຫ້ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເພື່ອມີທິດຊີ້ນຳ.

- ການພົວພັນປະສານສົມທົບກັບເຈົ້າໜ້າທີ່ຂອງປະເທດກ່ຽວຂ້ອງ ແລະ ການອຳນວຍຄວາມສະດວກໃຫ້ແກ່ຄະນະໃນໄລຍະເຄື່ອນໄຫວເຮັດວຽກຢູ່ປະເທດດັ່ງກ່າວ ລວມທັງການເຂົ້າຮ່ວມຂອງສະຖານທູດ ຫຼື ສະຖານກົງສຸນໃຫຍ່ ຂອງ ສປປ ລາວ ປະຈຳຢູ່ປະເທດນັ້ນ ແມ່ນຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດຕາມການສະເໜີຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

- ກໍລະນີຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຮູ້ພາສາລາວ, ຫູໜວກ, ປາກກືກ ຕ້ອງໃຫ້ມີຜູ້ແປພາສາ (ພາສາເວົ້າ, ພາສາມື) ລວມທັງການແປເອກະສານທາງກົດໝາຍທີ່ຈຳເປັນຮັບໃຊ້ການດຳເນີນຄະດີ ແມ່ນພາກສ່ວນກ່ຽວຂ້ອງທີ່ໃຫ້ການຊ່ວຍເຫຼືອໃນແຕ່ລະໄລຍະ ເປັນຜູ້ຮັບຜິດຊອບ ຫຼື ຕາມແຕ່ລະກໍລະນີ.

**3. ການຊ່ວຍເຫຼືອດ້ານການແພດ**

ການຊ່ວຍເຫຼືອດ້ານການແພດ ໃຫ້ປະຕິບັດດັ່ງນີ້:

- ພາກສ່ວນຮັບຜິດຊອບສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ມີໜ້າທີ່ໃຫ້ຄຳປຶກສາດ້ານຈິດໃຈ, ການປະຖົມພະຍາບານເບື້ອງຕົ້ນ ແລະ ປະສານງານກັບຂະແໜງການສາທາລະນະສຸກ ເພື່ອກະກຽມທີມງານ, ສະຖານທີ່, ອຸປະກອນການແພດຮັບໃຊ້ໃນການກວດ, ບົ່ງມະຕິ, ປິ່ນປົວ, ຢັ້ງຢືນອາຍຸ ແລະ ຢັ້ງຢືນສຸຂະພາບໃຫ້ແກ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງການໃຫ້ຄຳປຶກສາແນະນຳດ້ານສຸຂະພາບຈິດ, ຈິດບຳບັດ (ໂດຍບໍ່ເສຍຄ່າ).

- ກໍລະນີແພດໝໍຫາກສົງໄສວ່າຜູ້ມາກວດສຸຂະພາບນຳຕົນນັ້ນ ເປັນຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຂົ້າມາໃຊ້ບໍລິການດ້ວຍຕົນເອງ ພາຍຫຼັງໄດ້ຮັບການກວດ, ປິ່ນປົວ, ຢັ້ງຢືນສຸຂະພາບ ແລະ ຢັ້ງຢືນ ອາຍຸແລ້ວ, ພ້ອມນັ້ນແພດໝໍຕ້ອງແຈ້ງໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ

ໃນທັນໃດ, ຈາກນັ້ນຈຶ່ງນໍາສົ່ງໄປຍັງສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ.

- ກໍລະນີທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບຜົນກະທົບດ້ານສຸຂະພາບ ເປັນຕົ້ນ ພິການ, ເປັນບ້າ, ເສຍ ຈິດ, ປັນຍາອ່ອນ, ເສຍອົງຄະ, ພະຍາດຕິດຕໍ່ທາງເພດສໍາພັນ, ຕິດເຊື້ອໄວຣັດ HIV/AIDs, ສິ່ງເສບຕິດ ແມ່ນຂະແໜງການສາທາລະນະສຸກ ມີໜ້າທີ່ໃນການກວດ, ປິ່ນປົວ, ເບິ່ງແຍງ, ຍັ້ງຢືນສຸຂະພາບ ແລະ ຍັ້ງຢືນອາຍຸ. ພາຍຫຼັງໄດ້ຮັບການປິ່ນປົວສຸຂະພາບດີຂຶ້ນແລ້ວໃຫ້ສົ່ງກັບຄືນໄປຍັງສະຖານທີ່ພັກເຊົາຊົ່ວຄາວ ເພື່ອປະເມີນຄວາມພ້ອມຂອງຜູ້ກ່ຽວ, ຈາກນັ້ນຈຶ່ງນໍາສົ່ງກັບຄືນສູ່ຄອບຄົວ ແລະ ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ແລະ ການຈັດຕັ້ງທາງສັງຄົມ ສືບຕໍ່ໃຫ້ການຊ່ວຍເຫຼືອ.

- ຜົນກວດດ້ານການແພດ ແລະ ຂໍ້ມູນອື່ນຂອງຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັກສາເປັນຄວາມລັບ ແລະ ຕ້ອງມອບໃຫ້ອົງການດໍາເນີນຄະດີ ແລະ ສໍາເນົາໃຫ້ອົງການຈັດຕັ້ງຂອງລັດທີ່ເຮັດໜ້າທີ່ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

**4. ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ**

ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

- ກໍລະນີຜູ້ຖືກເຄາະຮ້າຍທີ່ເປັນເດັກ ຫຼື ເດັກທີ່ຕິດຕາມມານໍາຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍທີ່ກໍາລັງຮຽນຢູ່ ແລະ ມີຄວາມຕ້ອງການຢາກສືບຕໍ່ເຂົ້າຮຽນ ຕ້ອງໄດ້ຮັບນະໂຍບາຍໃນການສືບຕໍ່ຮຽນຢູ່ໂຮງຮຽນເດີມ ຫຼື ໂຮງຮຽນໃໝ່ ຫຼື ສະຖານການສຶກສາອື່ນທີ່ມີຄວາມປອດໄພໂດຍບໍ່ເສຍຄ່າ ຊຶ່ງແມ່ນຄວາມຮັບຜິດຊອບຂອງພາກສ່ວນທີ່ໃຫ້ການຊ່ວຍເຫຼືອໂດຍປະສານສົມທົບກັບຂະແໜງການສຶກສາທິການ ແລະ ກິລາ.

- ກໍລະນີຜູ້ຖືກເຄາະຮ້າຍທີ່ບໍ່ມີເງື່ອນໄຂສຶກສາຕໍ່ ກໍໃຫ້ຈັດຕັ້ງການບໍາລຸງຍົກລະດັບ (ຕາມສະພາບຕົວຈິງຂອງຜູ້ຖືກເຄາະຮ້າຍ), ການຝຶກອົບຮົມວິຊາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວມີວິຊາຊີບ, ມີວຽກເຮັດງານທໍາ, ມີລາຍຮັບ ແນໃສ່ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ ແມ່ນຄວາມຮັບຜິດຊອບຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການສຶກສາທິການ ແລະ ກິລາ ແລະ ສະຫະພັນແມ່ຍິງລາວ.

**5. ການຊ່ວຍເຫຼືອດ້ານເສດຖະກິດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນ, ການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີສ່ວນຮ່ວມເພື່ອສ້າງຄວາມເຂັ້ມແຂງດ້ານເສດຖະກິດ ໃຫ້ຜູ້ຖືກເຄາະຮ້າຍ ດ້ວຍການສະໜອງດ້ານການເງິນ, ການເຂົ້າຫາແຫຼ່ງທຶນ ຫຼື ການປະກອບອາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວສາມາດເຄື່ອນໄຫວຫາລ້ຽງຊີບ ແລະ ກຸ້ມຕົນເອງທາງດ້ານເສດຖະກິດ.

**6. ການຊ່ວຍເຫຼືອກັບຄືນສູ່ຄອບຄົວ ແລະ ສັງຄົມ**

**1). ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ**

ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ ໃຫ້ປະຕິບັດດັ່ງນີ້:

- ເຈົ້າໜ້າທີ່ຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແລະ ສະຫະພັນແມ່ຍິງລາວ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຊອກຫາພໍ່ແມ່, ຜູ້ປົກຄອງ, ບ້ານ, ເມືອງ, ແຂວງ, ຄອບ ຄົວ, ຍາດພີ່ນ້ອງຂອງຜູ້ຖືກເຄາະຮ້າຍ ເພື່ອປະເມີນສະພາບແວດລ້ອມ, ສຶກສາເບິ່ງເງື່ອນໄຂ, ຄວາມພ້ອມໃນການຮັບ ເອົາຜູ້ຖືກເຄາະຮ້າຍ ລວມທັງຄວາມເໝາະສົມຂອງຜູ້ກ່ຽວໃນການກັບຄືນສູ່ຄອບຄົວ ແລະ ສັງຄົມ.

**- ພາຍຫຼັງການປະເມີນຄວາມພ້ອມດ້ານຕ່າງໆແລ້ວໃຫ້ປະຕິບັດດັ່ງນີ້:**

+ ກໍລະນີຫາກມີຄວາມພ້ອມທຸກດ້ານ ລວມທັງຜູ້ຖືກເຄາະຮ້າຍເອງ ຈຶ່ງນໍາສົ່ງຜູ້ກ່ຽວໃຫ້ຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ ແລະ ອົງການປົກຄອງບ້ານ.

+ ກໍລະນີຜູ້ຖືກເຄາະຮ້າຍທີ່ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ການຊ່ວຍເຫຼືອດ້ານການຝຶກອົບຮົມວິຊາຊີບ ແມ່ນມອບໃຫ້ຂະແໜງການດັ່ງກ່າວສືບຕໍ່ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອ.

+ ກໍລະນີທີ່ຜູ້ຖືກເຄາະຮ້າຍ ຫາກບໍ່ສາມາດກັບຄືນສູ່ຄອບຄົວເດີມໄດ້ດ້ວຍສາເຫດອັນຈຳເປັນໃດໜຶ່ງນັ້ນ ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ໂດຍແມ່ນສະຫະພັນແມ່ຍິງລາວ ແລະ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສືບຕໍ່ໃຫ້ການຊ່ວຍເຫລືອ.

**2). ການຕິດຕາມ ຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ**

**ການຕິດຕາມ ຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ ໃຫ້ປະຕິບັດດັ່ງນີ້:**

- ການສືບຕໍ່ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແມ່ນຄວາມຮັບຜິດຊອບຕົ້ນຕໍຂອງຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ, ອົງການປົກຄອງບ້ານ ແລະ ສະຫະພັນແມ່ຍິງບ້ານ.
- ການຕິດຕາມຟື້ນຟູຜູ້ຖືກເຄາະຮ້າຍພາຍຫຼັງສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ແມ່ນຄວາມຮັບຜິດຊອບຂອງ ພາກສ່ວນທີ່ນຳສົ່ງ (ສະຫະພັນແມ່ຍິງລາວ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນກ່ຽວຂ້ອງ) ເປັນຜູ້ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ, ເອກະຊົນ ແລະ ການຈັດຕັ້ງທາງສັງຄົມ ເພື່ອສືບຕໍ່ ໃຫ້ການຊ່ວຍເຫຼືອຕາມແຕ່ລະກໍລະນີ.
- ພາຍຫຼັງຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອອັນຈຳເປັນສຳເລັດ ແລະ ປະກອບອາຊີບຢູ່ຫົວໜ່ວຍແຮງງານ ໃດໜຶ່ງທີ່ແນ່ນອນແລ້ວ ການຕິດຕາມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳທາງດ້ານແຮງງານຂອງຜູ້ກ່ຽວ ແມ່ນຄວາມຮັບຜິດຊອບຂອງສະຫະພັນກຳມະບານລາວ.

## ໝວດທີ 2
## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ຢູ່ ສປປ ລາວ

ເມື່ອເຈົ້າໜ້າທີ່ຕຳຫຼວດໄດ້ຮັບແຈ້ງຄວາມກ່ຽວກັບຄົນຕ່າງປະເທດຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ ສປປ ລາວ ແລ້ວ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນດ້ານຕ່າງໆໂດຍດ່ວນເຊັ່ນ: ການກອບກູ້, ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ, ອາຫານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍອັນຈຳເປັນ, ດ້ານການແພດ, ດ້ານກົດໝາຍ ແລະ ຜູ້ແປພາສາ;

ກະຊວງການຕ່າງປະເທດ ຕ້ອງຮີບຮ້ອນແຈ້ງໄປຍັງ ສະຖານທູດ ຫຼື ສະຖານກົງສຸນຂອງປະເທດຜູ້ຖືກເຄາະຮ້າຍທີ່ ປະຈຳ ສປປ ລາວ ເພື່ອສືບຕໍ່ໃຫ້ການຊ່ວຍເຫຼືອດ້ານຕ່າງໆ ລວມທັງການສົ່ງກັບຄືນປະເທດໂດຍມີການມອບ -ຮັບ ລະຫວ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນ ພາກທີ V, II, ຂໍ້ 3 ຂອງຄູ່ມືສະບັບນີ້.

ກໍລະນີຫາກບໍ່ມີສະຖານທູດ ຫຼື ສະຖານກົງສຸນຂອງປະເທດຜູ້ຖືກເຄາະຮ້າຍ ຢູ່ ສປປ ລາວ ນັ້ນ ແມ່ນມອບໃຫ້ກະຊວງການຕ່າງປະເທດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ປະເທດຂອງຜູ້ຖືກເຄາະຮ້າຍ ເພື່ອໃຫ້ການຊ່ວຍເຫຼືອຕາມກົດໝາຍ ຫຼື ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ສອງຝ່າຍ ແລະຫຼາຍຝ່າຍ.

## ພາກທີ V
## ການສົ່ງຕໍ່ຜູ້ຖືກເຄາະຮ້າຍ

**I. ຄວາມຮັບຮູ້ກ່ຽວກັບການສົ່ງຕໍ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

**1. ຄວາມໝາຍການສົ່ງຕໍ່**

ການສົ່ງຕໍ່ ແມ່ນວຽກງານໜຶ່ງຂອງການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຊຶ່ງໝາຍເຖິງການສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເອກະສານ, ຂໍ້ມູນ, ຫຼັກຖານໃຫ້ແກ່ພາກສ່ວນກ່ຽວຂ້ອງທີ່ມີຄວາມຮັບຜິດຊອບໃນການປົກປ້ອງ, ຊ່ວຍເຫຼືອ ແລະ ດຳເນີນຄະດີ ຕາມພາລະບົດບາດຂອງແຕ່ລະພາກສ່ວນ.

**2. ຈຸດປະສົງການສົ່ງຕໍ່**

ການສົ່ງຕໍ່ ແມ່ນເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຢ່າງເປັນລະບົບ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**II. ຂັ້ນຕອນການສົ່ງຕໍ່**

ຂັ້ນຕອນການສົ່ງຕໍ່ ລວມມີວຽກດັ່ງນີ້:

- ການປະສານສົມທົບກ່ອນການມອບ - ຮັບ;
- ການກະກຽມການມອບ-ຮັບ;
- ການມອບ-ຮັບ.

**1. ການປະສານສົມທົບກ່ອນການມອບ - ຮັບ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ກອບກູ້ເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III ຂອງຄູ່ມືສະບັບນີ້ແລ້ວ ກ່ອນສົ່ງໄປສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ, ທະຫານຊາຍແດນ, ອົງການປົກຄອງທ້ອງຖິ່ນ, ສະຫະພັນແມ່ຍິງລາວ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການການຕ່າງປະເທດ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ເພື່ອສົ່ງບຸກຄົນດັ່ງກ່າວ ໄປຍັງສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ.

ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພລວມມີ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ (ສູນກາງສະຫະພັນແມ່ຍິງລາວ), ສູນຮັບຕ້ອນຊົ່ວຄາວພາກເໜືອ (ແຂວງ ຫຼວງນ້ຳທາ), ອົງການປົກຄອງທ້ອງຖິ່ນ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ.

**2. ການກະກຽມມອບ - ຮັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

ທຸກກໍລະນີກ່ອນການມອບ - ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທັງພາຍໃນ ແລະ ຕ່າງປະເທດ ທັງສອງຝ່າຍ ຕ້ອງລາຍງານຂໍທິດຊີ້ນຳຈາກຂັ້ນເທິງຂອງຕົນ.

**- ການປະສານສົມທົບ**

ການປະສານສົມທົບ ໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ນອກຈາກປະຕິບັດຕາມຫຼັກການປະສານສົມທົບທີ່ກຳນົດໄວ້ ພາກທີ II, ຂໍ້ 6 ເທິງນີ້ແລ້ວ ຍັງຕ້ອງເອົາໃຈໃສ່ດັ່ງນີ້:

+ ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ໄດ້ຮັບຂໍ້ມູນ, ແຫຼ່ງຂ່າວ ກ່ຽວກັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດຢູ່ ສປປ ລາວ ຕ້ອງແຈ້ງໄປຍັງເຈົ້າໜ້າທີ່ຕໍາຫຼວດປະເທດກ່ຽວຂ້ອງເພື່ອກອບກູ້.

ພາຍຫຼັງເຈົ້າໜ້າທີ່ຕໍາຫຼວດປະເທດກ່ຽວຂ້ອງ ກອບກູ້ໄດ້ແລ້ວ ນໍາມາມອບໃຫ້ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ປະເທດດັ່ງກ່າວ ເພື່ອໃຫ້ການຊ່ວຍເຫຼືອອັນຈໍາເປັນ. ຈາກນັ້ນ, ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ປະສານສົມທົບກັບຫ້ອງການກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ຂອງ ສປປ ລາວ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກັບຄືນປະເທດດ້ວຍຄວາມປອດໄພ.

+ ກໍລະນີ ສປປ ລາວ ຫາກບໍ່ມີສົນທິສັນຍາ, ສັນຍາ ຫຼື ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຕ້ານການ ຄ້າມະນຸດກັບປະເທດປາຍທາງ ແມ່ນໃຫ້ສະຖານທູດ, ສະຖານກົງສຸນໃຫຍ່ ຫຼື ຫ້ອງການກົງສຸນ ຂອງ ສປປ ລາວ ແຈ້ງໄປຍັງຫ້ອງການກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ໂດຍຜ່ານ ກະຊວງການຕ່າງປະເທດຂອງ ສປປ ລາວ.

ຫ້ອງການກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ແລະ ພະແນກຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດແຂວງ ເພື່ອອໍານວຍຄວາມສະດວກໃນການແຈ້ງເຂົ້າ-ອອກເມືອງ ໃຫ້ແກ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**- ດ້ານເອກະສານ**

ການກະກຽມເອກະສານ ເພື່ອມອບ-ຮັບ ໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

**• ກໍລະນີກະກຽມມອບ-ຮັບຢູ່ພາຍໃນປະເທດ ລວມມີບັນດາເອກະສານຕົ້ນຕໍ ຄື:**

+ ໜັງສືນໍາສົ່ງ;
+ ໃບຢັ້ງຢືນເຄື່ອງຕິດຕົວຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
+ ປະຫວັດຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
+ ເອກະສານກ່ຽວກັບສຸຂະພາບ;
+ ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ໃບຢັ້ງຢືນການເກີດ;
+ ບົດບັນທຶກການສໍາພາດເບື້ອງຕົ້ນ;
+ ບົດບັນທຶກການມອບ-ຮັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**• ກໍລະນີກະກຽມມອບ-ຮັບລະຫວ່າງປະເທດ ລວມມີບັນດາເອກະສານຕົ້ນຕໍ ຄື:**

+ ໜັງສືນໍາສົ່ງ;
+ ໃບຢັ້ງຢືນເຄື່ອງຕິດຕົວຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
+ ປະຫວັດຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
+ ເອກະສານກ່ຽວກັບສຸຂະພາບ;
+ ໜັງສືຜ່ານແດນ (ປັດສະປໍ), ບັດຜ່ານແດນ ຫຼື ໜັງສືເດີນທາງຊົ່ວຄາວ;
+ ບັດປະຈໍາຕົວ, ສໍາມະໂນຄົວ, ບັດອອກແຮງງານ;
+ ໃບຢັ້ງຢືນການຝຶກອົບຮົມວິຊາຊີບ;
+ ເອກະສານກ່ຽວກັບການດໍາເນີນຄະດີຂອງປະເທດປາຍທາງ;
+ ບົດບັນທຶກການສໍາພາດ;
+ ບົດບັນທຶກການມອບ-ຮັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**- ບຸກຄະລາກອນ**

ການກະກຽມບຸກຄະລາກອນ ເພື່ອມອບ - ຮັບ ໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

**• ກໍລະນີກະກຽມມອບ - ຮັບ ຢູ່ພາຍໃນປະເທດ**

ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແຕ່ງຕັ້ງຄະນະຮັບຜິດຊອບການມອບ-ຮັບ ຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ພາກສ່ວນຕ່າງໆສົ່ງມາ, ຄະນະດັ່ງກ່າວປະກອບດ້ວຍຜູ້ຕາງໜ້າຈາກ ສະຫະພັນແມ່ຍິງລາວ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ.

**• ກໍລະນີກະກຽມມອບ-ຮັບລະຫວ່າງປະເທດ**

ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແຕ່ງຕັ້ງຄະນະຮັບຜິດຊອບການມອບ-ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຊຶ່ງປະກອບດ້ວຍ ກະຊວງປ້ອງກັນຄວາມສະຫງົບ (ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ) ສູນກາງສະຫະພັນແມ່ຍິງລາວ (ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ) ແລະ ກະຊວງການຕ່າງປະເທດ (ກົມກົງສຸນ).

ສຳລັບຂັ້ນທ້ອງຖິ່ນ ກ່ອນການມອບ-ຮັບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງລາຍງານຂໍທິດຊີ້ນຳຈາກກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

**- ງົບປະມານ, ພາຫະນະ ແລະ ສະຖານທີ່**

ກ່ອນຈະມີການມອບ-ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທັງສອງຝ່າຍຜູ້ມອບ-ຜູ້ຮັບ ຕ້ອງໄດ້ກະກຽມງົບປະມານ, ພາຫະນະ ແລະ ສະຖານທີ່ ໂດຍແມ່ນຄວາມຮັບຜິດຊອບຂອງລັດ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ລວມທັງອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ.

**3. ການມອບ-ຮັບ ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**

**• ກໍລະນີມອບ-ຮັບ ຢູ່ພາຍໃນປະເທດ**

- ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດຂັ້ນກ່ຽວຂ້ອງ ເປັນຜູ້ມອບຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພ້ອມດ້ວຍເອກະສານຕ່າງໆທີ່ກ່ຽວຂ້ອງ ໃຫ້ສະຫະພັນແມ່ຍິງຂັ້ນດັ່ງກ່າວ ຢູ່ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ຊຶ່ງທັງຝ່າຍມອບ ແລະ ຝ່າຍຮັບ ຕ້ອງໄດ້ຮ່ວມກັນປະຕິບັດບາງວຽກ ດັ່ງນີ້:

+ ກວດກາ ແລະ ເກັບຮັກສາຊັບສິນ, ເຄື່ອງຕິດຕົວ ຂອງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;

+ ເຊັນເອກະສານມອບ-ຮັບ ລວມທັງເອກະສານອື່ນທີ່ກ່ຽວຂ້ອງ ແລະ ມອບໃຫ້ແຕ່ລະຝ່າຍເກັບຮັກສາສະບັບຕົ້ນ ຝ່າຍລະ 01 ສະບັບ;

+ ລາຍງານຜົນການມອບ-ຮັບ ໃຫ້ຂັ້ນເທິງຂອງຕົນຮັບຊາບ.

- ກໍລະນີບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງອື່ນ ເປັນຜູ້ມອບ ກໍໃຫ້ປະຕິບັດຄືກັນກັບການມອບ - ຮັບທີ່ກ່າວ ມາເທິງນີ້.

**• ກໍລະນີມອບ-ຮັບລະຫວ່າງປະເທດ**

ຄະນະຮັບຜິດຊອບການມອບ-ຮັບ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເປັນຜູ້ຮັບເອົາຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ຢູ່ສະຖານທີ່ນັດໝາຍ ຊຶ່ງທັງຝ່າຍມອບ ແລະ ຝ່າຍຮັບ ຕ້ອງໄດ້ຮ່ວມກັນປະຕິບັດບາງວຽກ ດັ່ງນີ້:

- ຈັດພິທີມອບ-ຮັບ ຢູ່ສະຖານທີ່ນັດໝາຍ;
- ກວດກາ ແລະ ເກັບຮັກສາຊັບສິນ, ເຄື່ອງຕິດຕົວ ຂອງຜູ້ສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
- ເຊັນເອກະສານມອບ-ຮັບ ລວມທັງເອກະສານອື່ນທີ່ກ່ຽວຂ້ອງ ແລະ ມອບໃຫ້ແຕ່ລະຝ່າຍເກັບຮັກສາ ສະບັບຕົ້ນ ຝ່າຍລະ 01 ສະບັບ;
- ລາຍງານຜົນການມອບ-ຮັບ ໃຫ້ຂັ້ນເທິງຂອງຕົນຮັບຊາບ

# ແຜນອາດການສົ່ງຕໍ່ຜູ້ຖືກເຄາະຮ້າຍ
# ຈາກການຄ້າມະນຸດ

# ແຜນວາດທີ 1
# ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ຂອງ ສປປ ລາວ

**ການແຈ້ງຄວາມ**

ມີ ການແຈ້ງຄວາມ, ຮູ້, ເຫັນ, ຂໍ້ມູນຫຼັກຖານ, ແຫຼ່ງຂ່າວຈາກ: ຜູ້ຖືກເຄາະຮ້າຍ, ສະມາຊິກຄອບຄົວຂອງຜູ້ຖືກເຄາະຮ້າຍ, ຍາດພີ່ນ້ອງໃກ້ຊິດ, ບຸກຄົນໃກ້ຄຽງ, ບຸກຄົນອື່ນ, ອົງການຈັດຕັ້ງຕ່າງໆພາຍໃນ ແລະ ຕ່າງປະເທດ.

(ພາກທີ III ໝວດທີ 1, ຂໍ້ I, ຂໍ້ 1 ຄູ່ມືສະບັບນີ້)

**ການຮັບແຈ້ງຄວາມ**

- ເຈົ້າໜ້າທີ່ຕໍາຫຼວດ;
- ໃນກໍລະນີຈໍາເປັນ, ຮີບດ່ວນ ບຸກຄົນ, ຫຼື ການຈັດຕັ້ງອື່ນກໍສາມາດຮັບແຈ້ງຄວາມ ແລ້ວລາຍງານໃຫ້ເຈົ້າໜ້າທີ່ຕໍາຫຼວດ ໃນທັນໃດ ເພື່ອກອບກູ້, ຊ່ວຍເຫຼືອຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍ ແລະ ດໍາເນີນຄະດີຕໍ່ຜູ້ຖືກຫາ ຕາມກົດໝາຍ

(ພາກທີ III ໝວດທີ 1, ຂໍ້ I, ຂໍ້ 2 ຄູ່ມືສະບັບນີ້)

**ການກອບກູ້**

ເຈົ້າໜ້າທີ່ຕໍາຫຼວດ, ທະຫານຊາຍແດນ, ກະຊວງການຕ່າງປະເທດ, ສະຖານທູດ, ສະຖານກົງສູນໃຫຍ່ ຫຼື ຫ້ອງການກົງສູນຂອງ ສປປ ລາວ ຢູ່ ຕ່າງປະເທດ, ອົງການປົກຄອງບ້ານ

(ພາກທີ III ໝວດທີ 1, ຂໍ້ II, ຂໍ້ 1 ຄູ່ມືສະບັບນີ້)

**ສະຖານທີ່ພັກເຊົາທີ່ປອດໄພ ເບື້ອງຕົ້ນ**

- ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ (ສູນກາງສະຫະພັນແມ່ຍິງລາວ);
- ສູນຮັບຕ້ອນຊົ່ວຄາວ (ແຂວງ ຫຼວງນໍ້າທາ);
- ອົງການປົກຄອງທ້ອງຖິ່ນ;
- ສະຖານທູດ; ສະຖານກົງສູນໃຫຍ່ ຫຼື ຫ້ອງການກົງສູນຂອງ ສປປ ລາວ ຢູ່ ຕ່າງປະເທດ

1) ເຈົ້າໜ້າທີ່ຕໍາຫຼວດ:
- ເຈົ້າໜ້າທີ່ຕໍາຫຼວດສະ ແລະ ຕ້ານການຄ້າມະນຸດ
- ເຈົ້າໜ້າທີ່ຕໍາຫຼວດກໍາລັງວິຊາສະເພາະອື່ນ (ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ, ຕໍາຫຼວດຄຸ້ມຄອງສໍາມະໂນຄົວ, ຕໍາຫຼວດບໍລິການປະຊາຊົນ ແລະ ອື່ນໆ). ລາຍລະອຽດແມ່ນໃຫ້ເບິ່ງ ພາກທີ III ໝວດທີ 1, ຂໍ້ II, ຂໍ້ 1, ຂໍ້ 2 ຄູ່ມືສະບັບນີ້.

2) ທະຫານຊາຍແດນ: ລາຍລະອຽດແມ່ນໃຫ້ເບິ່ງ ພາກທີ III ໝວດທີ 1, ຂໍ້ II, ຂໍ້ 1, ຂໍ້ 2 ຄູ່ມືສະບັບນີ້.

3) ການຊວງການຕ່າງປະ, ສະຖານທູດ, ສະຖານກົງສູນໃຫຍ່ ຫຼື ຫ້ອງການກົງສູນຂອງ ສປປ ລາວ ຢູ່ ຕ່າງປະເທດ ລາຍລະອຽດແມ່ນໃຫ້ເບິ່ງ ພາກທີ III ໝວດທີ 1, ຂໍ້ II, ຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຄູ່ມືສະບັບນີ້.

4) ອົງການປົກຄອງບ້ານ: ລາຍລະອຽດແມ່ນໃຫ້ເບິ່ງ ພາກທີ III ໝວດທີ 1, ຂໍ້ II, ຂໍ້ 1, ຂໍ້ 4 ຄູ່ມືສະບັບນີ້.

**ການກຳນົດຕົວ:**

1. ການກຳນົດຕົວເບື້ອງຕົ້ນ: ໃຫ້ພາກສ່ວນກ່ຽວຂ້ອງນຳໃຊ້ຮ່າງແບບພິມການສຳພາດທີ່ມີຢູ່ໃນເອກະສານຊ້ອນທ້າຍຂອງຄູ່ມືສະບັບນີ້ ແລະ ເກັບຂໍ້ມູນເບື້ອງຕົ້ນ. ພາຍຫຼັງສຳພາດ ແລະ ເກັບຂໍ້ມູນເບື້ອງຕົ້ນສຳເລັດແລ້ວ ຜູ້ສຳພາດມີການສົມທຽບຂໍ້ມູນທີ່ປະເມີນເບື້ອງຕົ້ນກັບຜົນຂອງການສຳພາດ ເພື່ອຢັ້ງຢືນການກຳນົດຕົວເບື້ອງຕົ້ນ ກ່ຽວກັບການເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.
2. ການຢັ້ງຢືນ: ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ດຳເນີນການສຳພາດເບື້ອງຕົ້ນດ້ວຍຕົນເອງ ຫຼື ດຳເນີນການພິສູດຂໍ້ມູນທີ່ໄດ້ຈາກການສຳພາດຈາກການເກັບກຳຂໍ້ມູນເບື້ອງຕົ້ນ ຂອງພາກສ່ວນທີ່ກຳນົດເບື້ອງຕົ້ນສົ່ງໃຫ້ນັ້ນໃຫ້ລະອຽດຈະແຈ້ງ, ລົງຄຳເຫັນເປັນລາຍລັກອັກສອນ ແລະ ໃບຢັ້ງຢືນວ່າເປັນ ຫຼື ບໍ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ລາຍລະອຽດໃຫ້ເບິ່ງ ພາກທີ III, ໝວດທີ 1, ຂໍ້ III, ຂໍ້ 1 ແລະ 2 ຄູ່ມືສະບັບນີ້.

ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ໃຫ້ການຊ່ວຍເຫຼືອ 6 ດ້ານ (ສະຖານທີ່ພັກເຊົາ, ກົດໝາຍ, ການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ)

ການປະເມີນຄວາມພ້ອມຂອງຜູ້ຖືກເຄາະຮ້າຍ, ຄອບຄົວຂອງຜູ້ເຄາະຮ້າຍ, ສະພາບແວດລ້ອມອ້ອມຂ້າງ (ແມ່ນຄວາມຮັບຜິດຊອບຂອງສະຫະພັນແມ່ຍິງແຕ່ລະຂັ້ນ)

ການສົ່ງກັບຄືນສູ່ຄອບຄົວ, ສັງຄົມ (ເຈົ້າໜ້າທີ່ຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແລະ ສະຫະພັນແມ່ຍິງເປັນຜູ້ນຳສົ່ງຜູ້ຖືກເຄາະຮ້າຍໃຫ້ຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ)

ການຕິດຕາມຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ (ຄວາມຮັບຜິດຊອບຕົ້ນຕໍຂອງຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ, ອົງການປົກຄອງບ້ານ ແລະ ສະຫະພັນແມ່ຍິງ)

ການພັກເຊົາໄລຍະຍາວສຳລັບຜູ້ຖືກເຄາະຮ້າຍທີ່ບໍ່ສາມາດກັບຄືນສູ່ຄອບຄົວ ແລະ ສັງຄົມເດີມດ້ວຍເຫດຜົນໃດໜຶ່ງ ຫຼື ຜູ້ຖືກເຄາະຮ້າຍມີຄວາມຕ້ອງການປະກອບວຽກເຮັດງານທຳ ຫຼື ຢາກຍົກລະດັບສີມືແຮງງານ, ຝຶກອົບຮົບວິຊາຊີບໄລຍະຍາວແມ່ນຄວາມຮັບຜິດຊອບຂອງແໜງການແຮງງານ ແລະ ສະຫວັດດີການສັງຄົມ

ເປັນຜູ້ຖືກເຄາະຮ້າຍ

ກຸ່ມສ່ຽງ

ບໍ່ເປັນຜູ້ຖືກເຄາະຮ້າຍ

ການບໍ່ເປັນຜູ້ຖືກເຄາະຮ້າຍ ແຕ່ ເປັນກຸ່ມສ່ຽງການຄ້າມະນຸດແມ່ນມອບໃຫ້ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ສັງກັບລັດຖະບານ ເປັນຜູ້ສືບຕໍ່ໃຫ້ການຊ່ວຍເຫຼືອຕາມແຕ່ລະກໍລະນີ

ການສົ່ງກັບຄືນສູ່ຄອບຄົວ, ສັງຄົມ ຫຼື ຝຶກອົບຮົມວິຊາຊີບ, ຊອກວຽກເຮັດງານທຳ ແມ່ນ ຮັບຜິດຊອບຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ.

ການຕິດຕາມຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ

ຖ້າບໍ່ເປັນຜູ້ເຄາະຮ້າຍ ແຕ່ ເປັນການເຂົ້າ-ອອກເມືອງຜິດກົດໝາຍ ຫຼື ອື່ນໆ ແມ່ນໃຫ້ປະຕິບັດຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກຳນົດໄວ້

# ແຜນວາດທີ 2
# ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ລາວ-ໄທ




ກະຊວງການຕ່າງປະເທດ ຂອງ ສປປ ລາວ
ກະຊວງປ້ອງກັນຄວາມສະຫງົບ (ກອງເລຂາຄະນະກຳມະການດ້ານການຄ້າມະນຸດລະດັບຊາດ)

# ແຜນວາດທີ 3
# ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ລາວ-ຈີນ




ການສົ່ງຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍກັບຄືນ ສປປ ລາວ (ສູນຕ້ອນຮັບເຊົາຊົ່ວຄາວພາກເໜືອແຂວງຫຼວງນໍ້າທາ)
ການກຳນົດເບື້ອງຕົ້ນ
ເປັນຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ
ກຸ່ມສຽງຈາກການຄ້າມະນຸດ
ບໍ່ເປັນຜູ້ຖືກເຄາະຮ້າຍ
ສະຖານທີ່ພັກເຊົາທີ່ປອດໄພ (ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ
ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ
ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ
ການກຳນົດຕົວ
- ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ;
- ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ
ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ
ອອກໃບຢັ້ງຢືນ:
ເປັນຜູ້ຖືກເຄາະຮ້າຍ
ກຸ່ມສ່ຽງ
ບໍ່ເປັນຜູ້ຖືກເຄາະຮ້າຍ
ຊ່ວຍເຫຼືອ 6 ດ້ານ (ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ດຳເນີນການຊ່ວຍເຫຼືອຕາມແຜນວາດ 1.1)
ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ (ຝຶກອົບຮົມວິຊາຊີບ, ປະກອບວຽກເຮັດງານທຳ)
ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ
ສົ່ງກັບຄືນສູ່ຄອບຄົວແລະ ສັງຄົມ
ສົ່ງກັບຄືນສູ່ຄອບຄົວແລະ ສັງຄົມ
ຕິດຕາມຫຼັງກັບຄືນສູ່ຄອບຄົວ ແລະ ສັງຄົມ (01 ປີ)

## <u>ຮ່າງແບບພິມການສໍາພາດໃນກໍລະນີຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍ</u>

❖ **ເນື້ອໃນການສໍາພາດມີດັ່ງນີ້:**

• **ເປັນຫຍັງຈຶ່ງອອກຈາກບ້ານໄປ ? (ເຫດຜົນກ່ອນອອກຈາກບ້ານ)**

- ບໍ່ມີຄົນມາຊັກຊວນ ☐
- ມີຄົນຊັກຊວນ ☐
- ຊັກຊວນດ້ວຍໂທລະສັບ ☐
- ເຮັດວຽກຢູ່ພາຍໃນປະເທດ ☐
- ໄປເຮັດວຽກຢູ່ຕ່າງປະເທດ ☐
- ພໍ່ແມ່, ຜູ້ປົກຄອງ ຮັບຮູ້ ☐
- ພໍ່ແມ່, ຜູ້ປົກຄອງ ບໍ່ຮັບຮູ້ ☐
- ມີຄົນບອກວ່າມີວຽກໃຫ້ເຮັດ ☐
- ໄດ້ເງິນເດືອນຫຼາຍ ☐
- ມີຄົນບອກວ່າແຕ່ງດອງກັບຄົນຕ່າງປະເທດ ☐
- ໄດ້ຄ່າດອງຫຼາຍ ☐
- ມີເງິນສົ່ງມາໃຫ້ພໍ່ແມ່ ☐
- ຈະຊ່ວຍແບ່ງເບົາພາລະຄອບຄົວໄດ້ ☐
- ເປັນລູກຊາຍດຽວ ☐
- ຜູ້ບ່າວມີຖານະຮັ່ງມີ ☐
- ຍ້ອນທຸກຍາກ ☐
- ຖືກເຂົາບັງຄັບນາບຂູ່ ☐
- ເປັນໜີ້ສິນ ☐
- ຢາກຫາເງິນມາຊ່ວຍຄອບຄົວ ແລະ ຕົນເອງ ☐
- ຢາກມີຊີວິດການເປັນຢູ່ດີຂຶ້ນ ☐
- ພໍ່ແມ່, ຜູ້ປົກຄອງ ໄດ້ຮັບເງິນກ່ອນໄປ ☐
- ຕົນເອງໄດ້ຮັບເງິນກ່ອນໄປ ☐

• **ໄປແນວໃດ ?**

- ມີບຸກຄົນຮັບຜິດຊອບການເດີນທາງ ☐
- ມີບຸກຄົນແລ່ນເອກະສານໃຫ້ ☐
- ແລ່ນເອກະສານດ້ວຍຕົນເອງ ☐
- ຮັບຜິດຊອບຄ່າໃຊ້ຈ່າຍດ້ວຍຕົນເອງ ☐
- ພໍ່ແມ່, ຜູ້ປົກຄອງພາໄປເອງ ☐
- ໄປດ້ວຍຕົນເອງ ☐
- ໄປກັບຄົນທີ່ມາຊັກຊວນ ☐
- ຂີ່ລົດໄປ ☐
- ຂີ່ເຮືອໄປ ☐
- ຂີ່ຍົນໄປ ☐
- ຍ່າງໄປ ☐
- ໄປຜ່ານດ່ານ ☐
- ໄປບໍ່ຜ່ານດ່ານ ☐

- ໄປຄົນດຽວ ☐
- ໄປນຳກັນຫຼາຍຄົນ ☐
- ໄປນຳກັນມີທັງຍິງ ແລະ ຊາຍ ☐
- ມີແຕ່ຜູ້ຍິງໄປນຳກັນ ☐
- ມີແຕ່ຜູ້ຊາຍໄປນຳກັນ ☐
- ມີຄົນໄປສົ່ງ ☐
- ເອກະສານເດີນທາງຢູ່ນຳຄົນອື່ນ ☐
- ເອກະສານເດີນທາງຢູ່ນຳຕົນເອງ ☐
- ຈາກລາວໄປຕ່າງປະເທດ ☐
- ເດີນທາງຕາມການຄວບຄຸມຂອງຜູ້ພາໄປ ☐
- ຖືກແຍກທາງກັນໄປໃນເວລາເດີນທາງ ☐

• **ເມື່ອໄປຮອດບ່ອນເຮັດວຽກ ຫຼື ບ່ອນພັກເຊົາແລ້ວ ເປັນແນວໃດ ?**
- ມີຄົນບອກວ່າເປັນໜີ້ ☐
- ມີຄົນບອກວ່າກັບບ້ານບໍ່ໄດ້ ☐
- ບໍ່ແມ່ນວຽກທີ່ຕົກລົງກັນຢູ່ບ້ານ ☐
- ບໍ່ສາມາດໄປໃສໄດ້ ☐
- ຖືກຢຶດເອກະສານຕ່າງໆ ☐
- ມີຜູ້ຄວບຄຸມໄວ້ໃນສະຖານທີ່ ☐
- ຖືກບັງຄັບໃຫ້ເຮັດວຽກຕ່າງໆ ☐
- ຖືກບັງຄັບໃຫ້ເສບສິ່ງເສບຕິດ ☐
- ອາຫານການກິນບໍ່ພຽງພໍ ☐
- ບ່ອນພັກເຊົາແອອັດ, ບໍ່ປອດໄພ ☐
- ຖືກທຳຮ້າຍຮ່າງກາຍ ☐
- ຖືກບັງຄັບໃຫ້ເຮັດວຽກ ☐
- ຖືກບັງຄັບໃຫ້ຂາຍບໍລິການທາງເພດ ☐
- ຖືກປ້ອຍດ່າເປັນປະຈຳ ☐
- ບໍ່ໄດ້ຮັບຄ່າຕອບແທນ ☐
- ໄດ້ຮັບຄ່າຕອບແທນໜ້ອຍ ☐
- ເຮັດວຽກໜັກ ☐
- ເຮັດວຽກເກີນເວລາ ☐
- ບໍ່ມີເວລາພັກຜ່ອນ ☐
- ບໍ່ໄດ້ຮັບການປິ່ນປົວເວລາເຈັບເປັນ ☐
- ບໍ່ສາມາດຕິດຕໍ່ຫາຜູ້ອື່ນ ☐
- ຖືກບັງຄັບໃຫ້ຍົກຍ້າຍໄປຫຼາຍບ່ອນ ☐

# ຮ່າງແບບພິມການສຳພາດກໍລະນີເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

❖ **ເນື້ອໃນການສຳພາດມີດັ່ງນີ້:**

• **ການກະທຳ ແລະ ວິທີການ**

- ກະລຸນາເລົ່າເຫດການກ່ອນອອກຈາກບ້ານເປັນຄືແນວໃດ ?
- ກ່ອນອອກຈາກບ້ານ ມີໃຜມາເວົ້າກັບເຈົ້າແນວໃດ, ມີຈັກຄົນ, ຊື່ຫຍັງ, ອາຍຸຈັກປີ, ອາຊີບ, ຢູ່ໃສ ?
- ເຈົ້າຮູ້ຈັກກັບບຸກຄົນດັ່ງກ່າວໄດ້ແນວໃດ ?
- ເຂົາໄດ້ບອກກັບເຈົ້າແນວໃດ, ມີໃຜຮັບຮູ້ນຳແດ່ ?
- ມີວຽກຫຍັງໃຫ້ເຈົ້າເຮັດ, ຢູ່ໃສ ?
- ໄດ້ເງິນເດືອນຫຼາຍປານໃດ ?
- ໃຜຮັບຜິດຊອບການໃຊ້ຈ່າຍຕ່າງໆ ໃນການເດີນທາງ ?
- ໃຜຮັບຜິດຊອບກ່ຽວກັບການປະກອບເອກະສານຕ່າງໆ ?
- ໄປນຳກັນມີຈັກຄົນ, ມີໃຜແດ່, ຊື່ຫຍັງ, ອາຍຸຈັກປີ, ອາຊີບຫຍັງ, ຢູ່ໃສ ?
- ອອກເດີນທາງເວລາໃດ (ວັນທີ, ເດືອນ, ປີ), ໄປແນວໃດ, (ເຮືອ, ລົດ, ຍົນ, ຍ່າງ...), ຜ່ານດ່ານໃດ, ໃຊ້ເວລາເດີນທາງດົນປານໃດ ?
- ເອກະສານຢູ່ນຳຄົນພາໄປ ຫຼື ຢູ່ນຳຕົນເອງ ?
- ມີຄົນມາຮັບ ຫຼື ເດີນທາງໄປຫາເຂົາ ?
- ໃນເວລາເດີນທາງຖືກແຍກ ຫຼື ຖືກສົ່ງຕໍ່ ໄປບ່ອນອື່ນ ແນວໃດ ?

• **ສະຖານທີ່ເຮັດວຽກ (ຈຸດປະສົງ)**

- ສະຖານທີ່ທຳອິດທີ່ໄປເຖິງເປັນແນວໃດ ?
- ມີການແນະນຳກ່ຽວກັບວຽກງານແນວໃດ ?
- ເພິ່ນບອກວ່າເປັນໜີ້ເທົ່າໃດ ?
- ເອກະສານຂອງເຈົ້າຢູ່ນຳໃຜ ?
- ສະຖານທີ່ເຮັດວຽກເປັນແນວໃດ ?
- ໄດ້ເຮັດວຽກຕາມທີ່ໄດ້ຕົກລົງກັນເບື້ອງຕົ້ນ ຫຼື ບໍ່ ?
- ມີບຸກຄົນບັງຄັບ, ຂົ່ມຂູ່, ຄວບຄຸມໃຫ້ເຮັດວຽກຄືແນວໃດ? (ຕົນເອງ ແລະ ຄອບຄົວ)
- ເຮັດວຽກນຳກັນມີຈັກຄົນ ?
- ມື້ໜຶ່ງເຮັດວຽກຈັກຊົ່ວໂມງ ?
- ເຂົາເຈົ້າທຳຮ້າຍຮ່າງກາຍເຈົ້າແນວໃດ ?
- ສາມາດໄປ-ມາບ່ອນອື່ນໄດ້ ແນວໃດ ? ຖືກຂັງ ຫຼື ບໍ່ ? ຢູ່ສະຖານທີ່ໃດ ?
- ຖ້າບໍ່ເຮັດວຽກຕາມຄຳສັ່ງເປັນແນວໃດ ?
- ການເຮັດວຽກຂອງເຈົ້າໄດ້ຮັບຄ່າຕອບແທນຄືແນວໃດ ?
- ເວລາເຈັບເປັນເຂົາເຈົ້າເບິ່ງແຍງແນວໃດ ?
- ເຈົ້າສາມາດຕິດຕໍ່ກັບບຸກຄົນອື່ນແນວໃດ ?
- ຊີວິດການເປັນຢູ່ເປັນແນວໃດ (ກິນ, ຢູ່, ພັກເຊົາ) ?

ປກສ

ກະຊວງປ້ອງກັນຄວາມສະຫງົບ

(ກອງເລຂາ ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ)

ພິມທີ່: ໂຮງພິມ ໂຊກພາໄຊ ຈຳກັດ

ຈຳນວນ: 5000 ຫົວ